ວາລະສານວິທະຍາສາດສັງຄົມ (ວວສ) ສະບັບ 23 ຊຸດ 1 (2024) 17-31

ວາລະສານວິທະຍາສາດສັງຄົມ ມະຫາວິທະຍາໄລແຫ່ງຊາດ

ISSN: 2664-6331 Homepage: https://ssj.sjnl.la/

https://doi.org/10.71026/ss.2023.01003




# ສຶກສາຄວາມຄິດເຫັນຂອງພະນັກງານສ່ວຍສາອາກອນປະຈຳແຂວງວຽງຈັນຕໍ່ກັບບັນຫາກວດກາຫຼັງການແຈ້ງລາຍຮັບ

ອະນຸສອນ ຈັນທິລາດ, ແກ້ວມະນີ ສີທາລາດ, ສັນທະນາ ເຫຼັກທະບັນດິດ ແລະ ວົງເພັດ ຍອດຮັກສາ,

ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ

ອີເມວ: Anousone.Chanthilath@gmail.com

**ຂໍ້ມູນບົດຄວາມ**: ວັນທີສົ່ງ: 22/1/2023 ວັນທີປັບປຸງຄັ້ງທີ: 21/2/2023 ວັນທີຕອບຮັບ 20/6/2023

## ບົດຄັດຫຍໍ້

ການສຶກສາເລື່ອງ "ຄວາມຄິດເຫັນຂອງພະນັກງານສ່ວຍສາອາກອນປະຈຳແຂວງວຽງຈັນ ຕໍ່ບັນຫາກວດກາຫຼັງການແຈ້ງລາຍຮັບ" ໂດຍມີຈຸດປະສົງສຶກສາຄວາມຄິດເຫັນຂອງພະນັກງານສ່ວຍສາອາກອນຢູ່ສ່ວຍສາອາກອນປະຈຳແຂວງ ວຽງຈັນຕໍ່ບັນຫາກວດກາຫຼັງການແຈ້ງລາຍຮັບ ແລະ ປຽບທຽບຄວາມຄິດເຫັນຂອງພະນັກງານສ່ວຍສາອາກອນຢູ່ສ່ວຍສາອາກອນປະຈຳແຂວງ ວຽງຈັນຕໍ່ບັນຫາກວດກາຫຼັງການແຈ້ງລາຍຮັບ ໂດຍຈຳແນກຕາມໄລຍະເວລາການເຮັດວຽກ, ລະດັບຊັ້ນຕຳແໜ່ງ ແລະ ຂະແໜງການທີ່ສັງກັດ. ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາຄັ້ງນີ້ແມ່ນພະນັກງານສ່ວຍສາອາກອນປະຈຳແຂວງ ວຽງຈັນ ຈຳນວນ 42 ຄົນ; ໂດຍໃຊ້ແບບສອບຖາມໃນການເກັບກຳຂໍ້ມູນ ແລະ ນຳໃຊ້ໂປຣແກຣມ SPSS ເພື່ອຊອກຫາຄ່າຄວາມຖີ່ (ສ່ວນຮ້ອຍ), ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ, ຄິດໄລ່ຄ່າສະຖິຕິທົດສອບ F-Test ຫຼື One-Way ANOVA ເຂົ້າໃນການວິເຄາະຂໍ້ມູນ.

ຜົນການສຶກສາຄວາມຄິດເຫັນຂອງພະນັກງານສ່ວຍສາອາກອນປະຈຳແຂວງ ວຽງຈັນ ຕໍ່ບັນຫາກວດກາຫຼັງການແຈ້ງລາຍຮັບ ໃນບັນຫາດ້ານການວາງແຜນ ແລະ ກະກຽມກ່ອນການກວດກາ ໂດຍລວມແລ້ວແມ່ນຢູ່ໃນລະດັບປານກາງ, ດ້ານການດຳເນີນການກວດກາ ໂດຍລວມແລ້ວແມ່ນຢູ່ໃນລະດັບປານກາງ, ດ້ານການສະຫຼຸບ ແລະ ການບັນທຶກຜົນການກວດກາໂດຍລວມແລ້ວແມ່ນຢູ່ໃນລະດັບປານກາງ. ໂດຍມີຄ່າສະເລ່ຍ 2.78; 2.75; 2.98 ຕາມລຳດັບ.

ຜົນການປຽບທຽບຄວາມຄິດຂອງພະນັກງານສ່ວຍສາອາກອນແຂວງ ວຽງຈັນ ແມ່ນເຫັນໄດ້ວ່າ: ຜູ້ທີ່ມີໄລຍະເວລາເຮັດວຽກແຕກຕ່າງກັນມີຄວາມຄິດເຫັນແຕກຕ່າງກັນໃນດ້ານດຽວເທົ່ານັ້ນ ຄື: ບັນຫາດ້ານ ການດຳເນີນງານ, ຜູ້ທີ່ມີລະດັບຊັ້ນຕຳແໜ່ງທີ່ແຕກຕ່າງກັນມີຄວາມຄິດເຫັນ ແຕກຕ່າງກັນໃນ 2 ດ້ານຄື: ບັນຫາດ້ານການວາງແຜນ ແລະ ການກະກຽມກ່ອນການກວດກາ; ບັນຫາດ້ານການສະຫຼຸບ ແລະ ການບັນທຶກຜົນການກວດກາທີ່ແຕກຕ່າງກັນ, ຜູ້ທີ່ມີຂະແໜງທີ່ສັງກັດທີ່ແຕກຕ່າງກັນມີຄວາມຄິດເຫັນແຕກຕ່າງກັນໃນດ້ານດຽວຄື: ບັນຫາດ້ານການສະຫຼຸບ ແລະ ການບັນທຶກຜົນການກວດກາທີ່ແຕກຕ່າງກັນ.

**ຄຳສັບສຳຄັນ:** ຄວາມຄິດເຫັນ, ພະນັກງານສ່ວຍສາອາກອນ, ແຂວງວຽງຈັນ ແລະ ການກວດກາຫຼັງການແຈ້ງລາຍຮັບ

# The study Tax office's Opinions at Tax of Vientiane Province toward the problem of Tax Auditing

CHANTHILATH.A, SIHARATH.K,LEKTHABANDITH.S
and YAWDHACKSA.V
Faculty of Business and Economics, National University of Laos
Email: Anousone.Chanthilath@gmail.com

**Abstract**

The Study of Tax Officer's Opinions at Tax of Vientiane Province toward the problem of Tax Auditing with the aim of research Tax Officer's Opinions at Tax of Vientiane Province toward the problem of Tax Auditing and compare Tax Officer's Opinions at Tax of Vientiane Province toward the problem of Tax Auditing according to duration of working, position, working sector. A sample group was 44 Tax officers at Tax of Vientiane Province. The questionnaires to use in data collection and used SPSS program for calculating the frequency (percent), mean, standard deviation, F-test or One-way ANOVA.

The result of research Tax Officer's Opinions at Tax of Vientiane Province toward the problem of Tax Auditing found the problem of planning and prepare before auditing is in the level of medium, the problem of auditing operation is in the level of medium, the problem of conclusion and report consequence of auditing is in the level of medium which accounted for 2.78; 2.75; 2.98 respectively.

The comparation of the opinion of tax officer's result showed that the different duration of working has different opinion in the problem of auditing operation, the different position has different opinion in the problem of planning and prepare before auditing and conclusion and mark the result of auditing, the different working sector have different opinion in the problem of conclusion and report consequence of auditing.

**Keyword**: opinions, tax, Vientiane Province and tax auditin

**ບົດສະເໜີ**

ໃນປີ 2019 ກົດໝາຍວ່າດ້ວຍສ່ວຍສາອາກອນ ໄດ້ຮັບການປັບປຸງໃໝ່ມາຈາກ ກົດໝາຍສ່ວຍສາອາກອນ ສະບັບເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015 ເພື່ອໃຫ້ແທດເໝາະກັບການເຕີບໃຫຍ່ຂະຫຍາຍຕົວຂອງເສດຖະກິດໃນປະຈຸບັນທຸກຮູບແບບ ໂດຍໄດ້ແບ່ງແຍກ ອອກເປັນ 4 ກົດໝາຍຫຼັກໆທີ່ສໍາຄັນ ເຊິ່ງປະກອບມີ ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ເລກທີ 66/ສພຊ ລົງວັນທີ 17 ມິຖຸນາ 2019, ກົດໝາຍວ່າດ້ວຍອາກອນຊົມໃຊ້ ເລກທີ 68/ສພຊ ລົງວັນທີ 19 ມິຖຸນາ 2019, ກົດໝາຍວ່າດ້ວຍ ອາກອນມູນຄ່າເພີ່ມ ສະບັບປັບປຸງ ເລກທີ 48/ສພຊ ລົງວັນທີ 20 ມິຖຸນາ 2018 ແລະ ກົດໝາຍວ່າດ້ວຍອາກອນລາຍໄດ້ ເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019 ມີຜົນນໍາໃຊ້ ນັບຕັ້ງແຕ່ວັນທີ 1 ມັງກອນ 2020 ເປັນຕົ້ນມາ ເພື່ອໃຫ້ແທດເໝາະກັບສະພາບການຕົວຈິງຂອງເສດຖະກິດໃນປັດຈຸບັນໃຫ້ມີຄວາມຮັດກຸມຂຶ້ນໃນເລື່ອງອາກອນເງິນໄດ້ຕ່າງໆໂດຍການໄຈ້ແຍກປັບປຸງນິຕິກໍາໃຫ້ມີລັກສະນະສະເພາະງ່າຍຕໍ່ການນໍາໃຊ້ຕາມຈຸດປະສົງຂອງແຕ່ລະປະເພດທຸລະກິດ ແລະ ບຸກຄົນ, ສະກັດກັ້ນການຮົ່ວໄຫຼຂອງລາຍຮັບເຂົ້າງົບປະມານ, ເພື່ອຄວາມສາມາດໃນການເກັບລາຍຮັບໃຫ້ຕົງຕາມແຜນ ແລະ ການດໍາເນີນໃຫ້ເປັນແຕ່ລະບາດກ້າວເຊິ່ງແນ່ໃສ່ຊຸກຍູ້ສົ່ງເສີມການລົງທຶນທັງພາຍໃນ ແລະ ຕ່າງປະເທດ, ເຮັດໃຫ້ງົບປະມານແຫ່ງລັດເຂັ້ມແຂງເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດສັງຄົມໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງພ້ອມທັງປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນພາຍໃຕ້ເສດຖະກິດສັງຄົມໃນປັດຈຸບັນ. ແຂວງວຽງຈັນ ແມ່ນແຂວງໜຶ່ງທີ່ຕັ້ງຢູ່ພາກກາງ ຕອນເໜືອ ແລະ ເປັນແຂວງໜຶ່ງທີ່ໃຫຍ່. ເຊິ່ງສ່ວຍສາອາກອນປະຈໍາແຂວງວຽງຈັນຕັ້ງຢູ່ບ້ານ ເມືອງ ວຽງຄໍາ ແຂວງ ວຽງຈັນ ຂໍ້ມູນເພີ່ມເຕີມຕິດຕໍ່ເບີໂທລະສັບ 023 400 251. ສ່ວຍສາອາກອນປະຈໍາແຂວງວຽງຈັນປະກອບມີ 4 ຂະແໜງການຄື: ຂະແໜງ ບໍລິຫານ,ຈັດຕັ້ງ ແລະ ການເງິນ, ຂະແໜງແຜນການ ແລະ ບໍລິການລາຍຮັບ, ຂະແໜງກວດກາຫລັງການແຈ້ງລາຍຮັບ ແລະ ຂະແໜງ ກວດກາພາຍໃນ. ໃນນັ້ນຂະແໜງກວດກາຫລັງການແຈ້ງລາຍຮັບສາມາດສ້າງລາຍຮັບໄດ້ເປັນອັນດັບຕົ້ນໃຫ້ແກ່ສ່ວຍສາອາກອນປະຈໍາແຂວງ.

ວຽກງານການກວດກາຫຼັງການແຈ້ງລາຍຮັບນັບວ່າເປັນວຽກງານໜຶ່ງທີ່ມີພາລະບົດບາດໃນການປະຕິບັດວຽກງານເກັບກໍາລາຍຮັບສ່ວຍສາອາກອນເພື່ອຮັບປະກັນການມອບພັນທະອາກອນທີ່ຄົບຖ້ວນຂອງບັນດາວິສາຫະກິດ ແລະ ກະຕຸ້ນໃຫ້ເຈົ້າຂອງວິສາຫະກິດມີສະຕິໃນການມອບພັນທະອາກອນໃຫ້ຄົບຖ້ວນ ແລະ ທັນຕາມເວລາທີ່ກໍານົດ, ພ້ອມທັງເປັນການສະກັດກັ້ນການຫຼົບຫຼີກການມອບພັນທະອາກອນໃຫ້ລັດ. ໃນການປະຕິບັດວຽກງານດັ່ງກ່າວແມ່ນໄດ້ມີພະນັກງານ ກວດກາເພື່ອຈັດເກັບລາຍຮັບສ່ວຍສາອາກອນຈາກບັນດາວິສາຫະກິດທີ່ໄດ້ຂຶ້ນທະບຽນກັບສ່ວຍສາອາກອນປະຈໍາແຂວງລວມທັງໝົດມີ 952 ຫົວໜ່ວຍໃນນັ້ນ ຂະແໜງການບໍລິການມີ 350 ຫົວໜ່ວຍ, ການຄ້າມີ 345 ຫົວໜ່ວຍ, ການຜະລິດມີ 212 ຫົວໜ່ວຍ ແລະ ຂັ້ນຄຸ້ມຄອງ 45 ຫົວໜ່ວຍ. ເຊິ່ງໄດ້ປະຕິບັດຕາມແບບແຜນວິທີເຮັດວຽກລວມສູນປະຊາທິປະໄຕນໍາພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບຈັດຕັ້ງແບ່ງວຽກງານໃຫ້ແຕ່ລະຄົນຢ່າງລະອຽດເຊິ່ງແຕ່ລະຄົນຕ້ອງຮັບຜິດຊອບໃນການເລັ່ງທວງໜີ້ສິນອາກອນທີ່ຍັງຄ້າງຊໍາລະກັບບັນດາບໍລິສັດທີ່ຕົນເອງໄດ້ກວດກາສໍາເລັດໄປແລ້ວ. ມີການຈັດຕັ້ງພະນັກງານຈໍານວນໜຶ່ງລົງເກັບກໍາຂໍ້ມູນນໍາບັນດາວິສາຫະກິດ ເພື່ອເປັນຂໍ້ມູນຮັບໃຊ້ແກ່ວຽກງານການກວດກາການແຈ້ງລາຍຮັບ, ແຕ່ໃນການເກັບອາກອນໃນໄລຍະຜ່ານມາກໍ່ ມີຄວາມຊັບຊ້ອນ ແລະ ປາສະຈາກຂໍ້ຫຍຸ້ງຍາກບໍ່ໄດ້ ເພາະວ່າການກວດກາໄລ່ລຽງແມ່ນການກວດສອບຄວາມຖືກຕ້ອງຂອງລະບົບບັນຊີເພື່ອຮັບປະກັນໃຫ້ຜູ້ເສຍອາກອນແຈ້ງເສຍອາກອນຢ່າງຖືກຕ້ອງຕາມລະບຽບກົດໝາຍ ແລະ ຖືກຕ້ອງຕາມຄວາມເປັນຈິງ. ເຊິ່ງພະນັກງານຈໍາເປັນຕ້ອງໄດ້ນໍາໃຊ້ທັກສະ ແລະ ຄວາມສາມາດເປັນພິເສດເຂົ້າໃນການກວດກາໄລ່ລຽງແຕ່ລະຄັ້ງ.

ເນື່ອງຈາກໄລຍະເວລາທີ່ໃຊ້ໃນວຽກງານການກວດກາຫຼັງການແຈ້ງລາຍຮັບຍາວນານ. ດັ່ງນັ້ນ, ກຸ່ມ

ຜູ້ສຶກສາກໍ່ຄື ພວກຂ້າພະເຈົ້າຈຶ່ງໄດ້ມີຄວາມສົນໃຈໃນການສຶກສາໃນຫົວຂໍ້ທີ່ວ່າ "ສຶກສາຄວາມຄິດເຫັນຂອງພະນັກງານສ່ວຍສາອາກອນປະຈໍາແຂວງ ວຽງຈັນຕໍ່ບັນຫາກວດກາຫຼັງການແຈ້ງລາຍຮັບ" ວ່າມີຂໍ້ສະດວກ ແລະ ຫຍຸ້ງຍາກຫຍັງແດ່ໃນການປະຕິວຽກງານກວດກາຫຼັງການແຈ້ງລາຍຮັບ ຫຼື ເປັນບັນຫາໃນລະຫວ່າງການປະຕິງານຂອງເຈົ້າໜ້າທີ່ສ່ວຍສາອາກອນໃນໄລຍະທີ່ຜ່ານມາ ຈຶ່ງເຮັດໃຫ້ວຽກງານດັ່ງກ່າວແກ່ຍາວ.

**ຈຸດປະສົງຂອງການຄົ້ນຄວ້າ**: ສຶກສາຄວາມຄິດເຫັນຂອງພະນັກງານສ່ວຍສາອາກອນຢູ່ສ່ວຍສາອາກອນປະຈໍາແຂວງ ວຽງຈັນຕໍ່ບັນຫາກວດກາຫຼັງການແຈ້ງລາຍຮັບ ແລະ ປຽບທຽບຄວາມຄິດເຫັນຂອງພະນັກງານສ່ວຍສາອາກອນຢູ່ສ່ວຍສາອາກອນປະຈໍາແຂວງ ວຽງຈັນຕໍ່ບັນຫາກວດກາຫຼັງການແຈ້ງລາຍຮັບ ໂດຍຈໍາແນກຕາມ ໄລຍະເວລາໃນການເຮັດວຽກ, ລະດັບຊັ້ນຕໍາແໜ່ງ ແລະ ຂະແໜງການທີ່ສັງກັດ.

**ປະໂຫຍດທີ່ຄາດວ່າຈະໄດ້ຮັບ**

- ສາມາດຮັບຮູ້ເຖິງ ບັນຫາຂອງພະນັກງານກວດກາຫຼັງການແຈ້ງລາຍຮັບໃນການກວດກາໄລ່ລຽງລາຍຮັບຂອງບັນຫາຫົວໜ່ວຍວິສາຫະກິດປະເພດຕ່າງໆ

- ສາມາດເປັນບ່ອນອີງທາງດ້ານຂໍ້ມູນໃຫ້ແກ່ຜູ້ສົນໃຈໃນບັນຫາດັ່ງກ່າວ.

- ເປັນປະໂຫຍດຕໍ່ເຈົ້າໜ້າທີ່ຂະແໜງກວດກາຫຼັງການແຈ້ງລາຍຮັບ ໃນການນໍາບັນຫາໄປແກ້ໄຂ ແລະ ພັດທະນາໄປ ເພື່ອໃຫ້ການປະຕິບັດວຽກງານສະດວກຍິ່ງຂຶ້ນ.

- ສາມາດນໍາໄປເປັນບ່ອນອີງໃນການຖອດຖອນບົດຮຽນ ໃຫ້ແກ່ນັກສຶກສາທີ່ມີຄວາມສົນໃຈຢາກສຶກສາຄົ້ນຄວ້າໃນຫົວຂໍ້ທີ່ຄ້າຍຄືກັນເພື່ອນໍາໃຊ້ຂໍ້ມູນໃນການສຶກສາຄັ້ງຕໍ່ໄປ.

**ທົບທວນເອກະສານ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ ທິດສະດີຄວາມຄິດເຫັນ**

ຄໍາວ່າ "ຄວາມຄິດເຫັນ" (Opinion) ໃນໄລຍະຜ່ານມາໄດ້ມີນັກວິຊາການຫຼາຍທ່ານໃຫ້ຄວາມໝາຍຂອງຄວາມຄິດເຫັນໄວ້ຫຼາຍນິຍາມດັ່ງນີ້:

ຄວາມຄິດເຫັນໝາຍເຖິງ ການສະແດງອອກດ້ານຄວາມຮູ້ສຶກຂອງບຸກຄົນຕໍ່ສິ່ງໃດສິ່ງໜຶ່ງດ້ວຍການເວົ້າ, ການຂຽນໂດຍມີພື້ນຖານຄວາມຮູ້ເດີມຈາກປະສົບການທີ່ບຸກຄົນໄດ້ຮັບຕະຫຼອດຈົນຮອດສະພາບແວດລ້ອມຂອງບຸກຄົນນັ້ນເປັນຫຼັກໃນການສະແດງຄວາມຄິດເຫັນ (Best, 1997).

Hurlock (1995) ໄດ້ໃຫ້ແນວຄິດກ່ຽວກັບຄວາມຄິດເຫັນວ່າ ຄວາມຄິດເຫັນເປັນການ ສະແດງອອກຄວາມຮູ້ສຶກຕໍ່ສິ່ງໃດສິ່ງໜຶ່ງ ເປັນຄວາມຮູ້ສຶກເຊື່ອຖື ທີ່ບໍ່ໄດ້ຢູ່ບົນພື້ນຖານຄວາມແນ່ນອນ ຫຼື ຄວາມຈິງແຕ່ຂຶ້ນຢູ່ກັບຈິດໃຈບຸກຄົນຈະສະແດງອອກໂດຍມີຂໍ້ອ້າງ ຫຼື ການສະແດງເຫດຜົນສະໜັບສະໜູນ ຫຼື ປົກປ້ອງຄວາມຄິດເຫັນນັ້ນ ຄວາມຄິດເຫັນບາງຢ່າງເປັນຜົນຂອງການແປຄວາມໝາຍຂອງຂໍ້ເທັດຈິງຂຶ້ນຢູ່ກັບຄຸນສົມບັດສ່ວນຕົວຂອງແຕ່ລະບຸກຄົນເຊັ່ນ: ພື້ນຖານຄວາມຮູ້, ປະສົບການການເຮັດວຽກ, ສະພາບແວດລ້ອມ ແລະ ມີອາລົມເປັນສ່ວນປະກອບທີ່ສໍາຄັນການສະແດງຄວາມຄິດເຫັນອາດຈະໄດ້ຮັບການຍອມຮັບ ຫຼື ປະຕິເສດຈາກຄົນອື່ນກໍໄດ້.

ສະສາມາດ ສີສະອາດ ແລະ ຊົງຍົດ ອະຊີລະພາດອນ (2016) ໄດ້ກ່າວວ່າ ຄວາມຄິດ ເຫັນເປັນການສະແດງອອກຂອງບຸກຄົນທາງຄວາມຮູ້ສຶກ ຫຼື ທາງຄວາມເຊື່ອຕໍ່ສິ່ງໃດສິ່ງໜຶ່ງ ຫຼື ເຫດການໃດໜຶ່ງ ໂດຍບໍ່ ຕ້ອງມີຫຼັກຖານພິສູດຢັ້ງຢືນໄດ້ສະເໝີໄປ ແລ້ວນໍາໄປສູ່ການແປຄວາມຫມາຍ ຫຼື ການຄາດຄະເນໂດຍອາໄສຄວາມຮູ້, ຄວາມຮູ້ສຶກ, ປະສົບການ ແລະ ສະພາບແວດລ້ອມໃນຂະນະນັ້ນເປັນພື້ນຖານສະແດງອອກເຊິ່ງອາດຈະຖືກຕ້ອງ ຫຼື ບໍ່ຖືກຕ້ອງ, ໄດ້ຮັບການຍອມຮັບ ຫຼື ປະຕິເສດກໍ່ໄດ້. ນອກຈາກນີ້ຄວາມຄິດເຫັນອາດປ່ຽນແປງໄປຕາມການເວລາ ແລະ ສະແດງອອກໄດ້ທັງໃນດ້ານບວກ ຫຼື ດ້ານ ລົບກໍ່ໄດ້ໂດຍຜ່ານທາງຄໍາເວົ້າ, ການຂຽນ ຫຼື ເຄື່ອງໝາຍສັນຍາລັກການສໍາຫຼວດຄວາມຄິດເຫັນເປັນການສຶກສາຫາຄວາມຮູ້ສຶກຂອງບຸກຄົນ, ກຸ່ມຄົນທີ່ມີຕໍ່ສິ່ງໃດສິ່ງໜຶ່ງ, ແຕ່ລະຄົນຈະສະແດງຄວາມເຊື່ອ ແລະ ຄວາມຮູ້ສຶກໃດໆອອກມາດ້ວຍການເວົ້າ, ການຂຽນເປັນຕົ້ນ. ການສໍາຫຼວດຄວາມຄິດເຫັນຈະເປັນປະໂຫຍດຕໍ່ ການວາງແຜນການ, ນະໂຍບາຍຕ່າງໆ ເພື່ອເຮັດໃຫ້ການປະຕິບັດວຽກງານໄດ້ດໍາເນີນໄປຢ່າງມີປະສິດຕິພາບ ແລະ ປະສິດຕິຜົນສູງທີ່ສຸດ.

**ທິດສະດີສ່ວຍສາອາກອນ**

ທິດສະດີວ່າດ້ວຍການຈັດເກັບສ່ວຍສາອາກອນ ສະເໜີໂດຍ ອີຣິດ ລິນດາ (Erik Lindahl) ສະເໜີໄວ້ວ່າລັດຖະບານດຳເນີນການເກັບສ່ວຍສາອາກອນຢູ່ໃນທຸກລະດັບເຊັ່ນ: ລະດັບຊາດ, ລະດັບຂົງເຂດ ແລະ ລະດັບທ້ອງຖິ່ນນັ້ນແມ່ນເພື່ອຕອບສະໜອງຄວາມຕ້ອງການດ້ານລາຍຈ່າຍຂອງຄົນໃນຂົງເຂດວຽກງານສາທາລະນະພາຍໃນປະເທດນັ້ນກໍ່ເພື່ອການພັດທະນາເສດຖະກິດສັງຄົມ.

ກົດຫມາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019 ໄດ້ໃຫ້ຄວາມໝາຍຂອງສ່ວຍສາອາກອນວ່າ: ສ່ວຍສາອາກອນແມ່ນພັນທະເປັນເງິນຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ມີລາຍໄດ້ ຫຼື ລາຍຮັບຈາກການດຳເນີນທຸລະກິດ, ການຊົມໃຊ້ສິນຄ້າ ຫຼື ການບໍລິການ, ນຳໃຊ້ທີ່ດິນ ແລະ ຊັບສິນ ແລະ ການເຄື່ອນໄຫວອື່ນ ຢູ່ ສປປ ລາວ ແລະ ຕ່າງປະເທດ ຊຶ່ງຕ້ອງເສຍຕາມທີ່ໄດ້ກຳນົດໄວ້ໃນກົດຫມາຍ.

1) ລະບຽບ ແລະ ກົດໝາຍສ່ວຍສາອາກອນອີງຕາມກົດໝາຍວ່າດ້ວຍ ການຄຸ້ມຄອງສ່ວຍສາອາກອນ ສະບັບປັບປຸງ ເລກທີ 66/ສພຊ, ລົງວັນທີ 17 ທັນວາ 2019 ໄດ້ອອກລະບຽບສ່ວຍສາອາກອນໃຫ້ທຸກພາກສ່ວນເສດຖະກິດ, ອີງການຈັດຕັ້ງ ມະຫາຊົນ, ອົງການຈັດຕັ້ງສັງຄົມ, ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ, ຜູ້ບໍ່ມີພູມລຳເນົາທີ່ດຳເນີນທຸລະກິດ ຫຼື ທຳມາຫາກິນຢູ່ ສປປ ລາວ ລ້ວນແຕ່ປະກອບສ່ວນເຂົ້າໃນ ພາລະກິດຂອງຊາດ, ສົ່ງເສີມການດຳເນີນທຸລະກິດໃນຂະແໜງການ, ການກະຕຸ້ນຊຸກຍູ້ການຈາລະຈອນ, ການແຈກຢາຍສິນຄ້າເຮັດໃຫ້ເງິນຕາມີການຂະຫຍາຍຕົວ ແລະ ລາຄາທ້ອງຕະຫຼາດມີຄວາມສະຫງົບເປັນປົກກະຕິ, ດັດສະເລ່ຍລາຍໄດ້ສະຫວ່າງທຸກຊັ້ນຄົນຢ່າງມີຄວາມຍຸດຕິທຳ ແລະ ຮັບ-ປະກັນລາຍຮັບໃຫ້ແກ່ງົບປະມານຂອງລັດ.

ອີງຕາມກົດໝາຍວ່າດ້ວຍ ການຄຸ້ມຄອງສ່ວຍສາອາກອນ ເລກທີ 66/ສພຊ ມາດຕາ 92 (ສະບັບປັງປຸງ 2019) ນະໂຍບາຍຕໍ່ຜູ້ມີຜົນງານ: ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການເປັນແບບຢ່າງມອບພັນທະສ່ວຍສາອາກອນ, ການປະກອບສ່ວນຢ່າງຕັ້ງໜ້າ ເປັນເວລາ ສອງປີ ຕິດຕໍ່ກັນ ເຊັ່ນ ມີແຜນມອບອາກອນ ແລະ ມີແຜນນຳເຂົ້າສົ່ງອອກປະຈຳປີຊັດເຈນ, ການແຈ້ງເສຍ ແລະ ການມອບອາກອນ ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ, ຖືບັນຊີຖືກຕ້ອງຕາມກົດໝາຍ, ນຳໃຊ້ເອກະສານຢັ້ງຢືນທາງດ້ານການບັນຊີຖືກຕ້ອງ, ແຈ້ງເສຍຜ່ານຂໍ້ມູນສ່ວຍສາອາກອນ ແລະ ລະບົບການແຈ້ງເສຍພາສີ ແລະ ມອບອາກອນຜ່ານລະບົບທະນາຄານ ຫຼື ຄັງເງິນແຫ່ງຊາດ ຈະໄດ້ຮັບການຍ້ອງຍໍ, ອຳນວຍຄວາມສະດວກ ຫຼື ນະໂຍບາຍອື່ນດັ່ງນີ້:

ກ. ສຳລັບການເຄື່ອນໄຫວພາຍໃນ:

- ໄດ້ຮັບການຍ້ອງຍໍ ເປັນທຸລະກິດແບບຢ່າງ, ດີເດັ່ນ;
- ໄດ້ຮັບຄວາມສະດວກໃນການສົ່ງຄືນເງິນອາກອນກ່ອນການກວດກາ;
- ບໍ່ຖືກດຳເນີນການກວດກາບັນຊີປະຈຳປີໃນປີຖັດໄປ;
- ໃຫ້ຄວາມສະດວກໃນການອອກໃບຢັ້ງຢືນການມອບອາກອນ;
- ໄດ້ຮັບການຊ່ວຍເຫຼືອທາງດ້ານວິຊາການ ຫຼື ໃຫ້ຄຳປຶກສາ;

ຂ. ສຳລັບການ ສົ່ງອອກ-ນຳເຂົ້າ:

- ໄດ້ຮັບສິດທິພິເສດ ໃນການແຈ້ງພາສີເປັນລາຍລະອຽດ ຢູ່ດ່ານພາສີຊາຍແດນ ບ່ອນສົ່ງອອກ-ນຳເຂົ້າ;
- ໄດ້ຮັບການກຳນົດການບໍລິຫານຄ່າຄວາມສ່ຽງໃນລະດັບຕ່ຳ ໃນການກວດກາສິນຄ້າໂຕຈິງ;
- ໄດ້ຮັບອະນຸຍາດໃຫ້ນຳເອົາສິນຄ້າໄປລົງສາງ ແລະ ດຳເນີນການກວດກາສິນຄ້າຕົວຈິງຢູ່ສາງຂອງບໍລິສັດ.

2) ຈຸດປະສົງຂອງການເກັບອາກອນ

ບົດບາດຂອງລັດຖະບານໃນທາງເສດຖະກິດເຊິ່ງນັບມື້ນັບເພີ່ມຂຶ້ນຕາມການ ຂະຫຍາຍຕົວຂອງເສດຖະກິດນັ້ນ, ສ່ວຍສາອາກອນເຊິ່ງເປັນເຄື່ອງມືການເງິນຂອງລັດຖະບານກໍ່ ໄດ້ເພີ່ມບົດບາດຂຶ້ນເຊັ່ນກັນ, ຈາກເມື່ອກ່ອນເປັນການເກັບສ່ວຍສາອາກອນເພື່ອຫາລາຍໄດ້ໃຊ້ຈ່າຍໃນກິດຈະການຕ່າງໆທີ່ສຳຄັນ ແຕ່ໃນປັດຈຸບັນການເກັບສ່ວຍສາອາກອນ ແມ່ນມີວັດຖຸປະສົງ ໃນການເກັບເພື່ອຂະຫຍາຍຂອບເຂດເສດຖະກິດ.

3) ການກວດກາຫຼັງການແຈ້ງເສຍອາກອນ

ການກວດກາຫຼັງການແຈ້ງເສຍອາກອນ ແມ່ນການກວດກາຄືນບັນດາຂໍ້ມູນ ຕາມການແຈ້ງເສຍອາກອນ, ການມອບອາກອນແຕ່ລະປະເພດຂອງຜູ້ເສຍອາກອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ເລກທີ 66/ສພຊ ມາດຕາ 36 (ສະບັບປັບປຸງ 2019) ແລະ ລະບຽບການທີ່ກ່ຽວຂ້ອງ

4) ຂັ້ນຕອນການກວດກາຫຼັງການແຈ້ງເສຍອາກອນ

ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ມາດຕາທີ 37 (ສະບັບປັບປຸງ 2019) ຂັ້ນຕອນການກວດກາຫຼັງການແຈ້ງເສຍອາກອນ ມີດັ່ງນີ້:

ກ. ເກັບກຳ ແລະ ວິໄຈຂໍ້ມູນ ເອກະສານແຈ້ງເສຍອາກອນ, ບົດລາຍງານການເງິນ ແລະ ເອກະສານອື່ນຕາມກະຊວງການເງິນກຳນົດ.

ຂ. ຄັດເລືອກເປົ້າໝາຍກວດກາ

ຄ. ສ້າງແຜນ ແລະ ມອບໝາຍກວດກາ

ງ. ດຳເນີນການກວດກາຕົວຈິງ

ຈ. ລາຍງານຜົນຂອງການກວດກາ

ສ. ສະຫຼຸບ, ສ້າງບົດບັນທຶກຜົນຂອງການກວດກາ

5) ສິດຂອງພະນັກງານ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ

ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ມາດຕາທີ 69 (ສະບັບປັບປຸງ 2019) ວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ, ພະນັກງານ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ ມີສິດ ດັ່ງນີ້:

ກ. ໄດ້ຮັບຄວາມຊ່ວຍເຫຼືອ ແລະ ອຳນວຍຄວາມສະດວກກ່ຽວກັບວຽກງານຄຸ້ມຄອງສ່ວຍສາອາກອນຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາກລັດ ແລະ ເອກະຊົນ ເມື່ອມີຄວາມຈຳເປັນ ຫຼື ມີການຮ້ອງຂໍຈາກຂະແໜງສ່ວຍສາອາກອນ

ຂ. ພົວພັນກັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນທີ່ກ່ຽວຂ້ອງ ມີສ່ວນຮ່ວມເກັບກຳຂໍ້ມູນຕ່າງໆກ່ຽວກັບວຽກງານຄຸ້ມຄອງສ່ວຍສາອາກອນ

ຄ. ທວງໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນທີ່ກ່ຽວຂອ້ງ ເພື່ແຈ້ງເອກະສານການບັນຊີ, ຂໍ້ມູນຂ່າວສານຕ່າງໆ

ງ. ທວງໃຫ້ບຸກຄົນ , ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ ທີ່ມີໜີ້ອາກອນຄ້າງມອບ ມາຊຳລະໃຫ້ຄົບຖ້ວນ

ຈ. ກວດກາບັນຊີຕາມເອກະສານ ຂອງຜູ້ເສຍອາກອນຢູ່ສຳນັກງານສ່ວຍສາອາກອນ, ກວດກາກັບທີ່ ແລະ ກະທັນຫັນຢູ່ສຳນັກງານຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ

ສ. ນຳໃຊ້ມາດຕະການຕໍ່ຜູ້ບໍ່ປະຕິບັດພັນທະສ່ວຍສາອາກອນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ

ຊ. ຂັ້ນງວດກວດກາການນຳໃຊ້ໃບເກັບເງິນ ແລະ ເອກະສານອື່ນ ທີ່ພົວພັນກັບການເຄື່ອນຍ້າຍສິນຄ້າໃນສາງ, ຮ້ານຄ້າ, ຕະຫຼາດ ແລະ ອື່ນໆ

ຍ. ນຳໃຊ້ສິດອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

6) ໜ້າທີ່ ຂອງພະນັກງານ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ

ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ມາດຕາທີ 70 (ສະບັບປັບປຸງ 2019) ພະນັກງານ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ ມີໜ້າທີ່ດັ່ງນີ້:

ກ. ໂຄສະນາ, ເຜີຍແຜ່ກົດໝາຍ ແລະ ລະບຽບການກ່ຽວກັບສ່ວຍສາອາກອນໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ

ຂ. ປະຕິບັດຕາມ ກົດໝາຍ, ລະບຽບການກ່ຽວກັບວຽກງານຄຸ້ມຄອງສ່ວຍສາອາກອນ ແລະ ກົດໝາຍອື່ນທີ່ກ່ຽວຂອ້ງ

ຄ. ສະໜອງຂໍ້ມູນຂ່າວສານ, ແນະນຳ, ອະທິບາຍກ່ຽວກັບວຽກງານຄຸ້ມຄອງສ່ວຍສາອາກອນ

ງ. ກວດກາ ການຄິດໄລ່, ການແຈ້ງ, ການຫັກ, ການຂໍຄືນ, ການຍົກເວັ້ນ, ການຫຼຸດຜ່ອນອັດຕາ ຫຼື ປະເພດອາກອນ ແລະ ການມອບ ອາກອນ

ຈ. ທວງໜີ້ອາກອນຄ້າງມອບ ຕາມກົດໝາຍ ແລະ ລະບຽບການ

ສ. ຮັກສາຂໍ້ມູນທີເປັນຄວາມລັບຂອງຜູ້ເສຍອາກອນ

ຊ. ຊຸກຍູ້, ຕິດຕາມການແຈ້ງເສຍອາກອນ ແລະ ການຊໍາລະອາກອນຜ່ານທະນາຄານ ເພື່ອມອບເຂົ້າງົບປະມານແຫ່ງລັດ

ຍ. ປະສານສົມ ທົບກັບຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງກ່ຽວກັບວຽກງານຄຸ້ມຄອງສ່ວຍສາອາກອນ

ດ. ຮັບ ແລະ ພິຈາລະນາ ແກ້ໄຂຄໍາສະເໜີຂອງຜູ້ເສຍອາກອນ ຕາມຂອບເຂດສິດຂອງຕົນ

ຕ. ປະຕິບັດໜ້າທີ່ອື່ນ ຕາມທີ່ ໄດ້ກໍານົດໄວ້ໃນກົດໝາຍ.

7) ປະເພດສ່ວຍສາອາກອນ

ປະກອບດ້ວຍ 2 ປະເພດຄື: ສ່ວຍສາອາກອນທາງອ້ອມ ແລະ ສ່ວຍສາອາກອນທາງກົງ:

ກ. ສ່ວຍສາອາກອນທາງອ້ອມ ແມ່ນອາກອນທີ່ເກັບຈາກຜູ້ຊົມໃຊ້ສິນຄ້າ ແລະ ການບໍລິການ ຜ່ານຜູ້ດໍາເນີນທຸລະກິດ ຢູ່ດິນແດນ ສປປ ລາວ. ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ເລກທີ 66/ສພຊ ມາດຕາ 12 (ສະບັບປັບປຸງ 2019) ສ່ວຍສາອາກອນທາງອ້ອມປະກອບດ້ວຍ

- ອາກອນມູນຄ່າເພີ່ມ: ແມ່ນອາກອນທີ່ເກັບຕາມມູນຄ່າສິນຄ້າ ແລະ ການບໍລິການທີ່ເພີ່ມຂຶ້ນຈາກການນໍາເຂົ້າສິນຄ້າ, ການສະໜອງສິນຄ້າ ແລະ ບໍລິການ ຢູ່ພາຍໃນປະເທດຊຶ່ງຜູ້ຊົມໃຊ້ສຸດທ້າຍເປັນຜູ້ເສຍ. ອີງຕາມກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ເລກທີ 48/ສພຊ ລົງວັນທີ 20 ມິຖຸນາ 2018 ມາດຕາ 2.

- ອາກອນຊົມໃຊ້: ແມ່ນພັນທະເປັນເງິນທີ່ເກັບຈາກການຊົມໃຊ້ບາງປະເພດ ສິນຄ້າທີ່ນໍາເຂົ້າ ຫຼື ຜະລິດພາຍໃນ ແລະ ການບໍລິການຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຢູ່ພາຍໃນປະເທດ ອີງຕາມກົດໝາຍວ່າດ້ວຍອາກອນຊົມໃຊ້ ເລກທີ 68/ສພຊ, ລົງວັນທີ 19 ມິຖຸນາ 2019 ມາດຕາ 2.

ຂ. ສ່ວຍສາອາກອນທາງກົງແມ່ນ ອາກອນທີ່ເກັບຈາກ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງເຊິ່ງມີລາຍໄດ້ ຫຼື ດໍາເນີນທຸລະກິດຢູ່ພາຍໃນ ແລະ ຕ່າງປະເທດ ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019, ມາດຕາ 15 ສ່ວຍສາອາກອນທາງກົງປະກອບດ້ວຍ.

- ອາກອນລາຍໄດ້: ແມ່ນ ພັນທະເປັນເງິນ ທີ່ເກັບຈາກລາຍໄດ້ຂອງບຸກຄົນ, ນິຕິບຸກຄົນເຊິ່ງ ມີລາຍໄດ້. ອາກອນລາຍໄດ້ປະກອບດ້ວຍ: ອາກອນລາຍໄດ້ວິສາຫະກິດ, ອາກອນລາຍໄດ້ບຸກຄົນ ອີງຕາມກົດໝາຍວ່າດ້ວຍອາກອນລາຍໄດ້ ເລກທີ 67/ສພຊ ມາດຕາ 2.

- ອາກອນທີ່ດິນ ແລະ ຊັບສິນ: ແມ່ນ ພັນທະເປັນເງິນ ທີ່ເກັບຈາກບຸກຄົນ , ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ເປັນຜູ້ໃຊ້ທີ່ດິນ ແລະ ຊັບສິນ. ອາກອນທີ່ດິນ ແລະ ຊັບສິນ ລາຍລະອຽດໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ. ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ມາດຕາ 17.

- ອາກອນສິ່ງແວດລ້ອມ: ແມ່ນ ພັນທະເປັນເງິນ ທີ່ເກັບຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ຮັບອະນຸຍາດໃຫ້ດໍາເນີນທຸລະກິດ, ໃຫ້ນໍາເຂົ້າ ຫຼື ນໍາໃຊ້ສິນຄ້າ, ຊັບພະຍາກອນທໍາມະຊາດຢູ່ ສປປ ລາວ ຊຶ່ງກໍ່ໃຫ້ເກີດມີນລະພິດຕໍ່ສິ່ງແວດລ້ອມ, ມີຄວາມສ່ຽງ, ສ້າງຄວາມເສຍຫາຍຕໍ່ສຸຂະພາບ, ຊີວິດຂອງຄົນ, ສັດ, ພືດ ແລະ ຄວາມດຸນດ່ຽງຂອງລະບົບນິເວດ.ອາກອນສິ່ງແວດລ້ອມ ລະອຽດໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ມາດຕາ 18.

-ຄ່າທໍານຽມ ແລະ ຄ່າບໍລິການ: ຄ່າທໍານຽມ ແມ່ນພັນທະທາງກົງ ທີ່ເປັນຄ່າສິດຄຸ້ມຄອງບໍລິຫານລັດທີ່ເກັບຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ເຄື່ອນໄຫວທາງດ້ານເສດຖະກິດ ແລະ ສັງຄົມ ໂດຍຜ່ານຂະແໜງການຂອງລັດດ້ວຍການຢັ້ງຢືນ ແລະ ອະນຸຍາດ.

-ຄ່າບໍລິການ ແມ່ນ ພັນທະທາງກົງ ທີ່ເປັນຄ່າບໍລິການທາງດ້ານບໍລິຫານວິຊາການຈາກຂະແໜງການຂອງລັດ ໃນການເຄື່ອນໄຫວຮັບໃຊ້ສັງຄົມ ໂດຍບໍ່ຫວັງຜົນກໍາໄລ ແລະ ເພື່ອເປັນການຊ່ວຍໜູນ ການໃຊ້ຈ່າຍງົບປະມານແຫ່ງລັດ.

- ຄ່າທໍານຽມ ແລະ ຄ່າບໍລິການ ໄດ້ກໍານົດລະອຽດໄວ້ໃນລັດຖະບັນຍັດ ວ່າດ້ວຍຄ່າທໍານຽມ ແລະ ຄ່າບໍລິການ ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ, ມາດຕາ 19 (ສະບັບປັບປຸງ 2019).

8) ມາດຕະການຕໍ່ ຜູ້ລະເມີດກົດໝາຍ ແລະ ລະບຽບ ກ່ຽວກັບສ່ວຍສາອາກອນ

ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ມາດຕາທີ 93 (ສະບັບປັງປຸງ 2019) ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ລົງວິໄນ, ປັບໄໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາຕາມແຕ່ກໍລະນີ.

## ບົດຄົ້ນຄ້ວາທີ່ກ່ຽວຂ້ອງ

ດວງຕາ ວິໄລພັນ (2016) ໄດ້ສຶກສາຄວາມເຂົ້າໃຈຂອງຜູ້ປະກອບການທີ່ມີຕໍ່ວຽກງານກວດກາ-ໄລ່ລຽງອາກອນທ້າຍປີຂອງພະແນກສ່ວຍສາອາກອນແຂວງວຽງຈັນ ໂດຍມີຈຸດປະສົງເພື່ອ: ຊອກຮູ້ຄວາມເຂົ້າໃຈຂອງຜູ້ປະກອບການທີ່ມີຕໍ່ວຽກງານກວດກາ-ໄລ່ລຽງອາກອນທ້າຍປີຂອງພະແນກສ່ວຍສາອາກອນແຂວງວຽງຈັນ ແລະ ປຽບທຽບຄວາມເຂົ້າໃຈຂອງຜູ້ປະກອບການທີ່ມີຕໍ່ວຽກງານກວດກາ-ໄລ່ລຽງອາກອນທ້າຍປີຂອງພະແນກສ່ວຍສາອາກອນແຂວງວຽງຈັນໂດຍແຍກຕາມຂໍ້ມູນປັດໄຈສ່ວນບຸກຄົນ. ວິທີການສຶກສາເປັນແບບປະລິມານໂດຍນຳໃຊ້ໂປຣແກຣມ SPSS ມາຊ່ວຍໃນການວິເຄາະຂໍ້ມູນ. ຜົນຂອງການສຶກສາພົບວ່າ: ຜູ້ປະກອບການໃນແຂວງວຽງຈັນສ່ວນຫຼາຍມີຄວາມເຂົ້າໃຈຕໍ່ວຽກງານກວດກາ-ໄລ່ລຽງອາກອນທ້າຍປີໃນລະດັບປານກາງ, ໂດຍມີຄວາມເຂົ້າໃຈໃນດ້ານບັນຊີໃນລະດັບຫຼາຍ, ຮອງລົງມາແມ່ນດ້ານຂັ້ນຕອນການກວດກາໄລ່ລຽງເຊິ່ງມີຄວາມເຂົ້າໃຈໃນລະດັບປານກາງ, ມີຄວາມເຂົ້າ ໃຈດ້ານການມອບພັນທະອາກອນປະເພດຕ່າງໆຢູ່ລະດັບປານກາງ ແລະ ດ້ານຂໍ້ຫ້າມ, ການປັບໃໝກໍມີຄວາມເຂົ້າໃຈໃນລະດັບປານກາງເຊັ່ນດຽວກັນ.

ມະລິວັນ ວົງໄຊ (2016) ໄດ້ສຶກສາບັນຫາການກວດກາພາຍໃນຂອງກົມກວດກາກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍມີຈຸດປະສົງເພື່ອຊອກຮູ້ບັນຫາຂອງການກວດກາພາຍໃນຂອງກົມກວດກາຕາມທັດສະນະຄະຕິຂອງພະນັກງານກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ປຽບທຽບການກວດກາພາຍໃນຂອງກົມກວດກາຕາມທັດສະນະຄະຕິແຍກຕາມປັດໄຈສ່ວນບຸກຄົນ. ວິທີໃນການສຶກສາແບບປະລິມານໂດຍນຳໃຊ້ໂປຣແກຣມ SPSS ມາຊ່ວຍໃນການວິເຄາະຂໍ້ມູນ. ຜົນຂອງການສຶກສາພົບວ່າ: ບັນຫາກວດກາພາຍໃນພົບຫຼາຍທີ່ສຸດແມ່ນການວາງແຜນກ່ອນການກວດກາ ບໍ່ໄດ້ກຳນົດໃຫ້ມີການປະເມີນຄວາມສ່ຽງເພື່ອພິຈາລະນາວ່າມີຄວາມສ່ຽງລະດັບໃດ, ຄວາມຂັດແຍ່ງໃນການປະຕິບັດງານຂອງກົມກວດກາ; ບໍ່ສາມາດຕິດຕາມຜົນວ່າໄດ້ນຳເອົາຂໍ້ສະເໜີແນະໄປປະຕິບັດງານແທ້ ຫຼື ບໍ່ມີຄ່າສະເລ່ຍ 4.24; 4.12; ແລະ 4.15 ຕາມລຳດັບ. ສ່ວນການປຽບທຽບການກວດກາພາຍໃນຂອງກົມກວດກາແຍກຕາມປັດໃຈສ່ວນບຸກຄົນພົບວ່າມີຄວາມແຕກຕ່າງກັນໃນທຸກໆຂໍ້ສົມມຸດຖານດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05

## ກອບແນວຄວາມຄິດ




## ວິທີການຄົ້ນຄວ້າ

ໃນການສຶກສາຄັ້ງນີ້ພວກຂ້າພະເຈົ້າໄດ້ລົງເກັບ ກຳ ແລະ ຂໍຂໍ້ມູນຕົວຈິງໃຊ້ວິທີເກັບກຳຂໍ້ມູນດ້ວຍຮູບແບບຂໍ້ມູນປະຖົມພູມ.

ແລະ ຂໍ້ມູນທີ່ໄດ້ແມ່ນມາຈາກການສ້າງແບບສອບຖາມທີ່ໄດ້ສອບຖາມຄວາມຄິດເຫັນຂອງພະນັກງານສ່ວຍສາອາກອນ ກ່ຽວກັບວຽກງານກວດກາຫລັງການແຈ້ງລາຍຮັບ ທີ່ຂຶ້ນກັບການຄຸ້ມຄອງຂອງ ສ່ວຍສາອາກອນປະຈຳແຂວງວຽງຈັນ ໂດຍການສຶກສາຄັ້ງນີ້ມີຄວາມຕ້ອງການເກັບຂໍ້ມູນຈາກພະນັກງານສ່ວຍສາອາກອນປະຈຳແຂວງວຽງຈັນ ເຊິ່ງລວມມີພະນັກງານທັງໝົດ 44 ຄົນ, ມີຫນ້າປະຈຳການຈຳນວນ 44

ຄົນ ເຊິ່ງກຸ່ມປະຊາກອນທັງໝົດ (N) ມີຈຳນວນນ້ອຍເກີນໄປຈຶ່ງໄດ້ກຳນົດເອົາກຸ່ມຕົວຢ່າງທັງໝົດ (n) ຈຳນວນ 44 ຄົນ ແລະ ເຮັດການວິເຄາະຂໍ້ມູນດ້ວຍປໂປຣແກຣມສຳເລັດຮູບ SPSS for Windows ເຂົ້າຊ່ວຍເພື່ອວິເຄາະບັນຫາ, ອຸປະສັກໃນການກວດກາໄລ່ລຽງບັນຊີວິສາຫະກິດໃນໄລຍະຜ່ານມາຂອງພະນັກງານກວດກາຢູ່ ສ່ວຍສາອາກອນປະຈຳແຂວງວຽງຈັນ.

**ຜົນການສຶກສາ**

**1) ຄວາມຄິດເຫັນຂອງພະນັກງານສ່ວຍສາອາກອນປະຈຳແຂວງວຽງຈັນຕໍ່ບັນຫາກວດກາຫຼັງການແຈ້ງລາຍຮັບ**

- ດ້ານການວາງແຜນ ແລະ ການກະກຽມກ່ອນການກວດກາ ໂດຍລວມແລ້ວພະນັກງານມີຄວາມຄິດເຫັນ ລະດັບປານກາງ ຜົນຂອງການສຶກສາພົບວ່າ: ການເກັບກຳຂໍ້ມູນກ່ອນການເລີ່ມຕົ້ນດຳເນີນການກວດກາຍັງບໍ່ພຽງພໍ ພະນັກງານມີຄວາມຄິດເຫັນ ລະດັບປານກາງ ເພາະວ່າ ກ່ອນການລົງກວດກາ ພະນັກງານແມ່ນໄດ້ມີການກະກຽມບັນດາຂໍ້ມູນຕ່າງໆທີ່ຈຳເປັນໃນການກວດກາ ແຕ່ກໍຍັງມີຂໍ້ມູນຈຳນວນໜຶ່ງທີ່ເກັບກຳບໍ່ທັນໄດ້ຄົບຖ້ວນເທື່ອ ໂດຍມີຄ່າສະເລ່ຍ 3.28 ແລະ ຄ່າຜັນປ່ຽນມາດຕະຖານ 0.94, ການວິໄຈຂໍ້ມູນຫຼັງຈາກການເກັບກຳຂໍ້ມູນ ເພື່ອຊອກຮູ້ບັນຫາ ຫຼື ສາເຫດທີ່ພາໃຫ້ວິສາຫະກິດບໍ່ປະຕິບັດຕາມກົດໝາຍ ຍັງບໍ່ສາມາດຊອກຫາສາເຫດໄດ້ ພະນັກງານມີຄວາມຄິດເຫັນ ລະດັບປານກາງ ໂດຍມີຄ່າສະເລ່ຍ 3.04 ແລະ ຄ່າຜັນປ່ຽນມາດຕະຖານ 0.85, ໄລຍະເວລາໃນການເກັບກຳຂໍ້ມູນຕ່າງໆກ່ອນການກວດກາຍັງບໍ່ພຽງພໍ ພະນັກງານມີຄວາມຄິດເຫັນ ລະດັບປານກາງ ໂດຍມີຄ່າສະເລ່ຍ 2.92 ແລະ ຄ່າຜັນປ່ຽນມາດຕະຖານ 1.02, ງົບປະມານອະນຸມັດຊ້າ, ເຮັດໃຫ້ການກວດກາຊ້າ ພະນັກງານມີຄວາມຄິດເຫັນ ລະດັບປານກາງ ໂດຍມີຄ່າສະເລ່ຍ 2.85 ແລະ ຄ່າຜັນປ່ຽນມາດຕະຖານ 0.97, ຜູ້ກວດກາບໍ່ເອົາໃຈໃສ່ເປັນພິເສດຕໍ່ກັບການສ້າງແຜນການກວດກາ, ການສ້າງແຜນການກວດກາຂອງຜູ້ກວດກາທີ່ໄດ້ຮັບມອບໝາຍໜ້າທີ່ບໍ່ມີປະສິດທິພາບເທົ່າທີ່ຄວນ ແລະ ຜູ້ກວດກາຍັງມີທັກສະ ຫຼື ຄວາມສາມາດບໍ່ພຽງພໍໃນການວິເຄາະ ແລະ ປະເມີນໜ້າວຽກກວດກາ ໂດຍພະນັກງານ ມີຄວາມຄິດເຫັນ ຕໍ່ກັບ ທັງສາມ ບັນຫານີ້ ໃນລະດັບປານກາງ ໂດຍມີຄ່າສະເລ່ຍຄືກັນຢູ່ທີ່ 2.78 ແລະ ຄ່າຜັນປ່ຽນມາດຕະຖານ 1.07, 1.22, 1.02 ຕາມລຳດັບ, ເອກະສານດຳເນີນງານສຳລັບການກວດກາທີ່ສ້າງໂດຍຜູ້ກວດກາບໍ່ໄດ້ຮັບການປັບປຸງເຮັດໃຫ້ບໍ່ສອດຄ່ອງກັບສະພາບຕົວຈິງໃນແຕ່ລະຂັ້ນຕອນຂອງການປະຕິບັດງານ ພະນັກງານມີຄວາມຄິດເຫັນ ລະດັບປານກາງ ເພາະວ່າ ພະນັກງານແມ່ນໄດ້ມີການປັບປຸງເອກະສານການກວດກາເພື່ອໃຫ້ແທດເໝາະກັບບັນດາວິສາຫະກິດ ແຕ່ກໍຍັງມີຈຳນວນໜຶ່ງທີ່ຍັງບໍ່ເໝາະສົມເທື່ອ ໂດຍມີຄ່າສະເລ່ຍ 2.73 ແລະ ຄ່າຜັນປ່ຽນມາດຕະຖານ 1.12, ຜູ້ກວດກາຍັງບໍ່ມີຄວາມພ້ອມໃນການກະກຽມຄຳຖາມ ເພື່ອສຳພາດກັບຜູ້ເສຍອາກອນ, ຫົວໜ້າວິສາຫະກິດ ຫຼື ຫົວໜ້າບັນຊີຂອງວິສາຫະກິດທີ່ຖືກກວດກາ ໂດຍພະນັກງານ ມີຄວາມຄິດເຫັນ ໃນລະດັບປານກາງ ເພາະວ່າເຈົ້າໜ້າທີ່ແມ່ນໄດ້ມີການກະກຽມຄຳຖາມຈຳນວນໜຶ່ງເພື່ອສອບຖາມ ກັບບັນດາວິສາຫະກິດ ແຕ່ກໍຍັງບາງມີຄຳຖາມທີ່ຕ້ອງໄດ້ພົບພໍ້ຕົວຈິງຈຶ່ງສາມາດຮູ້ໄດ້ ໂດຍມີຄ່າສະເລ່ຍ 2.66 ແລະ ຄ່າຜັນປ່ຽນມາດຕະຖານ 1.07, ຜູ້ກວດກາບໍ່ມີຄວາມສາມາດ ແລະ ປະສົບການເໝາະສົມກັບປະລິມານວຽກທີ່ໄດ້ຮັບມອບໝາຍ ໂດຍພະນັກງານມີຄວາມຄິດເຫັນ ໃນລະດັບປານກາງ ໂດຍມີຄ່າສະເລ່ຍ 2.61 ແລະ ຄ່າຜັນປ່ຽນມາດຕະຖານ 1.14, ເອກະສານແຜນການກວດກາບໍ່ໄດ້ຖືກສ້າງຂຶ້ນຢ່າງເປັນລາຍລັກອັກສອນ ພະນັກງານມີຄວາມຄິດເຫັນ ລະດັບໜ້ອຍ ເພາະວ່າ ກ່ອນການລົງກວດກາ ພະນັກງານກວດກາ ແມ່ນໄດ້ມີການສ້າງຮ່າງເອກະສານກວດກາກ່ອນທຸກຄັ້ງ ໂດຍມີຄ່າສະເລ່ຍ 2.23 ແລະ ຄ່າຜັນປ່ຽນມາດຕະຖານ 1.00.

- ດ້ານການດຳເນີນການກວດກາ ໂດຍລວມແລ້ວພະນັກງານມີຄວາມຄິດເຫັນ ລະດັບ ປານກາງ ຜົນຂອງການສຶກສາພົບວ່າ: ວິສາຫະກິດສະໜອງເອກະສານລາຍງານການເງິນ ແລະ ຫຼັກຖານທາງການບັນຊີບໍ່ຄົບຖ້ວນເຮັດໃຫ້ເກີດຂໍ້ຫຍຸ້ງຍາກ ພະນັກງານມີຄວາມຄິດເຫັນ ລະດັບຫຼາຍ ເພາະວ່າ ບາງວິສາຫະກິດແມ່ນຍັງບໍ່ທັນມີລະບົບບັນຊີທີ່ດີເທື່ອ ຈຶ່ງເຮັດການສະໜອງບາງເອກະສານແມ່ນບໍ່ຄົບຖ້ວນທັງໝົດ ໂດຍມີຄ່າສະເລ່ຍ 3.52 ແລະ ຄ່າຜັນປ່ຽນມາດຕະຖານ 0.74 ,ວິສາຫະກິດລາຍງານຂໍ້ມູນໃນບົດສະຫຼຸບບັນຊີ

ບໍ່ຄົບຖ້ວນ ແລະ ບິດເບືອນຈາກຄວາມເປັນຈິງ ພະນັກງານມີຄວາມຄິດເຫັນ ລະດັບຫຼາຍ ເພາະວ່າ ວິສາຫະກິດສ່ວນຫຼາຍແມ່ນໄດ້ມີການຫາທາງຫຼີກເວັ້ນການເສຍອາກອນຈາກກຳໄລຕົວຈິງ ໂດຍມີຄ່າສະເລ່ຍ 3.47 ແລະ ຄ່າຜັນປ່ຽນມາດຕະຖານ 1.04, ວິສາຫະກິດ/ພະນັກງານບັນຊີ ຍັງເມີນເສີຍຕໍ່ການຕັກເຕືອນ ແລະ ບໍ່ປະຕິບັດຕາມຄຳແນະນຳຂອງເຈົ້າໜ້າທີ່ສ່ວຍສາອາກອນ ພະນັກງານມີຄວາມຄິດເຫັນ ລະດັບຫຼາຍ ເພາະວ່າວິສາຫະກິດຍັງຖືເບົາຕໍ່ກັບຄຳແນະນຳຂອງເຈົ້າໜ້າທີ່ ແລະ ຍັງບໍ່ມີຄວາມຕື່ນຕົວໃນການປະຕິບັດຕາມກົດໝາຍຢ່າງເຄັ່ງຄັດ ໂດຍມີຄ່າສະເລ່ຍ 3.47 ແລະ ຄ່າຜັນປ່ຽນມາດຕະຖານ 0.83, ບໍ່ໄດ້ຮັບການຮ່ວມມືຈາກວິສາກະກິດກ່ຽວກັບການກະກຽມເອກະສານ ພະນັກງານມີຄວາມຄິດເຫັນ ລະດັບປານກາງ ເພາະວ່າ ຍັງມີບາງ ບໍລິສັດທີ່ຍັງບໍ່ໃຫ້ການຮ່ວມມືທີ່ດີແກ່ເຈົ້າໜ້າທີ່ທີ່ລົງໄປປະຕິບັດງານ ໂດຍມີຄ່າສະເລ່ຍ 3.30 ແລະ ຄ່າຜັນປ່ຽນມາດຕະຖານ 0.78, ວິສາຫະກິດ/ພະນັກງານບັນຊີ ໄດ້ມີການພະຍາຍາມບ່າຍບ່ຽງຕໍ່ກັບການຊັກຖາມຂອງເຈົ້າໜ້າທີ່ກວດກາ ພະນັກງານມີຄວາມຄິດເຫັນ ລະດັບປານກາງ ໂດຍມີຄ່າສະເລ່ຍ 3.30 ແລະ ຄ່າຜັນປ່ຽນມາດຕະຖານ 0.89, ວິສາຫະກິດມີການປ່ຽນພະນັກງານບັນຊີ ເຮັດໃຫ້ການສະໜອງຂໍ້ມູນມີຄວາມຫຍຸ້ງຍາກ ພະນັກງານມີຄວາມຄິດເຫັນ ລະດັບປານກາງ ໂດຍມີຄ່າສະເລ່ຍ 3.09 ແລະ ຄ່າຜັນປ່ຽນມາດຕະຖານ 0.95, ວິສາຫະກິດສະໜອງເອກະສານລາຍງານການເງິນປອມເພື່ອຫຼີກລ້ຽງອາກອນທີ່ຕ້ອງມອບຕົວຈິງ ພະນັກງານມີຄວາມຄິດເຫັນ ລະດັບປານກາງ ໂດຍມີຄ່າສະເລ່ຍ 3.07 ແລະ ຄ່າຜັນປ່ຽນມາດຕະຖານ 1.11, ເຈົ້າໜ້າທີ່ບໍ່ມີຄວາມເປັນອິດສະຫຼະໃນການກວດກາ ຍັງມີຄວາມເກງໃຈກັບເຈົ້າຂອງວິສາຫະກິດ ພະນັກງານມີຄວາມຄິດເຫັນ ລະດັບປານກາງ ໂດຍມີຄ່າສະເລ່ຍ 2.71 ແລະ ຄ່າຜັນປ່ຽນມາດຕະຖານ 0.99, ພະນັກງານສ່ວຍສາອາກອນບໍ່ພຽງພໍຕໍ່ການດຳເນີນການກວດກາ ພະນັກງານມີຄວາມຄິດເຫັນ ລະດັບໜ້ອຍ ໂດຍມີຄ່າສະເລ່ຍ 2.50 ແລະ ຄ່າຜັນປ່ຽນມາດຕະຖານ 0.89, ການສື່ສານ ຫຼື ການອະທິບາຍຈຸດປະສົງລາຍລະອຽດຂອງຂອບເຂດໃນການກວດກາໃຫ້ວິສາຫະກິດບໍ່ຊັດເຈນ ພະນັກງານມີຄວາມຄິດເຫັນ ລະດັບໜ້ອຍ ເພາະວ່າ ພະນັກງານກວດກາແມ່ນໄດ້ມີການອະທິບາຍສິດ, ຂອບເຂດ ແລະ ຄວາມສຳຄັນຂອງວຽກງານກວດກາ ໃຫ້ແກ່ເຈົ້າຂອງວິສາຫະກິດໄດ້ຮັບຮູ້ ເພື່ອປະຕິບັດສິດ ແລະ ໜ້າທີ່ຂອງໂຕວິສາຫະກິດເອງ ໂດຍມີຄ່າສະເລ່ຍ 2.47 ແລະ ຄ່າຜັນປ່ຽນມາດຕະຖານ 1.04, ພະນັກງານສ່ວຍສາອາກອນຂາດຄວາມຮູ້, ຄວາມສາມາດ, ທັກສະ ພະນັກງານມີຄວາມຄິດເຫັນ ລະດັບໜ້ອຍ ເພາະວ່າ ພະນັກງານແມ່ນໄດ້ມີການເຝິກອົບຮົມລະບຽບກົດໝາຍກ່ອນທີ່ຈະລົງໄປກວດກາ ໂດຍມີຄ່າສະເລ່ຍ 2.47 ແລະ ຄ່າຜັນປ່ຽນມາດຕະຖານ 1.17, ບໍ່ມີການກຳນົດວັນ ແລະ ໄລຍະເວລາໃນການກວດກາໃຫ້ກັບວິສາຫະກິດ ພະນັກງານມີຄວາມຄິດເຫັນ ລະດັບໜ້ອຍ ເພາະວ່າ ລະບຽບຂອງການກວດກາແມ່ນໄດ້ມີການກຳນົດເວລາຢ່າງຄັກແນະ ໂດຍອີງຕາມຄູ່ມືກວດກາກັບທີ່ 2006 ແມ່ນໄດ້ກຳນົດໃຫ້ການກວດກາຕ້ອງສຳເລັດພາຍໃນ 90 ວັນລັດຖະການ ໂດຍມີຄ່າສະເລ່ຍ 2.28 ແລະ ຄ່າຜັນປ່ຽນມາດຕະຖານ 1.13, ເຈົ້າໜ້າທີ່ສ່ວຍສາອາກອນທີ່ມີປະສົບການຫຼາຍບໍ່ຖ່າຍທອດຄວາມຮູ້ ແລະ ປະສົບການໃຫ້ພະນັກງານທີ່ປະສົບການໜ້ອຍ ພະນັກງານມີຄວາມຄິດເຫັນ ລະດັບໜ້ອຍ ເພາະວ່າ ພະນັກງານແມ່ນໄດ້ມີການປະສານງານກັນ ແລະ ໄດ້ແນະນຳບອກສອນເຊິ່ງກັນ ແລະ ກັນ ລະຫວ່າງ ຜູ້ທີ່ມີປະສົບການຫຼາຍ ແລະ ຜູ້ທີ່ຍັງມີປະສົບການໜ້ອຍ ໂດຍມີຄ່າສະເລ່ຍ 2.23 ແລະ ຄ່າຜັນປ່ຽນມາດຕະຖານ 1.00, ຫົວໜ້າທີມກວດກາບໍ່ໄດ້ກວດເບິ່ງຄືນການປະຕິບັດໜ້າທີ່ຂອງລູກນ້ອງຂອງຕົນວ່າສຳເລັດສົມບູນ ແລະ ເປັນໄປຕາມແຜນການກວດກາທີ່ໄດ້ວາງໄວ້ ຫຼື ບໍ່ ພະນັກງານມີຄວາມຄິດເຫັນ ລະດັບໜ້ອຍ ເພາະວ່າ ຫົວໜ້າທີມ ແມ່ນໄດ້ມີການຕິດຕາມການປະຕິບັດວຽກງານຂອງຜູ້ໃຕ້ບັງຄັບບັນຊາຂອງຕົນເປັນປະຈຳ ໂດຍມີຄ່າສະເລ່ຍ 2.14 ແລະ ຄ່າຜັນປ່ຽນມາດຕະຖານ 1.18, ເຈົ້າໜ້າທີ່ສ່ວຍສາອາກອນບໍ່ປະຕິບັດລະບຽບ, ມາດຕະຖານ, ຄູ່ມື ແລະ ວິທີການປະຕິບັດກ່ຽວກັບວຽກງານກວດກາ ພະນັກງານມີຄວາມຄິດເຫັນ ລະດັບໜ້ອຍ ເພາະວ່າ ເຈົ້າໜ້າທີ່ສ່ວນໃຫຍ່ແມ່ນໄດ້ປະຕິບັດຕາມລະບຽບກົດໝາຍຕ່າງໆທີ່ວາງອອກໃນແຕ່ລະໄລຍະໄດ້ເປັນຢ່າງດີ ໂດຍມີຄ່າສະເລ່ຍ 2.09 ແລະ ຄ່າຜັນປ່ຽນມາດຕະຖານ 1.10, ພະນັກງານສ່ວຍ

ສາອາກອນບໍ່ໄດ້ມີການບັນທຶກລະອຽດເປັນລາຍລັກອັກສອນ ພະນັກງານມີຄວາມຄິດເຫັນ ລະດັບໜ້ອຍ ເພາະວ່າພະນັກງານແມ່ນໄດ້ມີການຈົດກ່າຍ, ຕີພິມ ຂໍ້ມູນທີ່ຈຳເປັນຕໍ່ກັບວຽກງານກວດກາ ໂດຍສະເພາະແມ່ນຂໍ້ມູນທາງການບັນຊີ ໂດຍມີຄ່າສະເລ່ຍ 1.95 ແລະ ຄ່າຜັນປ່ຽນມາດຕະຖານ 0.98.

- ບັນຫາຈາກການສະຫຼຸບ ແລະ ການບັນທຶກຜົນການກວດກາໂດຍລວມແລ້ວພະນັກງານມີຄວາມຄິດເຫັນ ລະດັບ ປານກາງ ຜົນຂອງການສຶກສາພົບວ່າ: ວິສາຫະກິດມີການຕົບແຕ່ງລາຍຈ່າຍພາຍໃນບໍລິສັດ ພະນັກງານມີຄວາມຄິດເຫັນ ລະດັບຫຼາຍ ເພາະວ່າ ວິສາຫະກິດແມ່ນໄດ້ມີການພະຍາຍາມເຮັດໃຫ້ລາຍຮັບຫຼຸດລົງເພື່ອຈະໄດ້ມອບພັນທະອາກອນໜ້ອຍລົງ ໂດຍມີຄ່າສະເລ່ຍ 3.52 ແລະ ຄ່າຜັນປ່ຽນມາດຕະຖານ 0.89, ຜົນບົດສະຫຼຸບບັນຊີວິສາຫະກິດພົບວ່າມີການເສື່ອງອຳພັນທະທີ່ຕ້ອງມອບໃຫ້ລັດ ພະນັກງານມີຄວາມຄິດເຫັນ ລະດັບຫຼາຍ ເພາະວ່າ ບັນດາວິສາຫະກິດ ທີ່ຖືກກວດກາແມ່ນຕົກເປັນເປົ້າໝາຍທີ່ຕ້ອງສົງໃສ ຈຶ່ງເຮັດໃຫ້ສາມາດກວດພົບຕາມຂໍ້ສົງໃສຂອງທາງເຈົ້າໜ້າທີ່ ໂດຍມີຄ່າສະເລ່ຍ 3.42 ແລະ ຄ່າຜັນປ່ຽນມາດຕະຖານ 0.94, ວິສາຫະກິດບໍ່ປະຕິບັດຕາມມາດຕາ 34 - 35 ຂອງກົດໝາຍ ວ່າດ້ວຍກົດໝາຍສ່ວຍສາອາກອນ ສະບັບປັບປຸງ ປີ 2015 ພະນັກງານມີຄວາມຄິດເຫັນ ລະດັບປານກາງ ໂດຍມີຄ່າສະເລ່ຍ 3.28 ແລະ ຄ່າຜັນປ່ຽນມາດຕະຖານ 0.86, ວິສາຫະກິດບໍ່ຍອມຮັບຜົນການສະຫຼຸບການກວດກາຈາກເຈົ້າໜ້າທີ່ສ່ວຍສາອາກອນ ພະນັກງານມີຄວາມຄິດເຫັນ ລະດັບປານກາງ ເພາະວ່າ ຍັງມີບາງວິສາຫະກິດ ທີ່ຍັງຫົວດື້ຕໍ່ກັບການປະຕິບັດງານຂອງທາງເຈົ້າໜ້າທີ່ທີ່ລົງໄປກວດກາ ໂດຍມີຄ່າສະເລ່ຍ 3.11 ແລະ ຄ່າຜັນປ່ຽນມາດຕະຖານ 0.99, ບໍ່ສາມາດຕິດຕາມປະເມີນຜົນວ່າວິສາຫະກິດໄດ້ນຳເອົາຂໍ້ສະເໜີແນະໄປຈັດຕັ້ງປະຕິບັດແທ້ ຫຼື ບໍ່ ພະນັກງານມີຄວາມຄິດເຫັນ ລະດັບປານກາງ ເພາະວ່າທາງເຈົ້າໜ້າທີ່ ແມ່ນບໍ່ໄດ້ໄປຕິດຕາມວິສາຫະກິດຢູ່ຕະຫຼອດເວລາ ຈຶ່ງເຮັດໃຫ້ບໍ່ສາມາດຮູ້ໃນເລື່ອງນີ້ໄດ້ສົມບູນ ໂດຍມີຄ່າສະເລ່ຍ 3.09 ແລະ ຄ່າຜັນປ່ຽນມາດຕະຖານ 0.95, ລະບຽບການປັບໄໝຍັງບໍ່ເໝາະສົມຕໍ່ກັບຜູ້ລະເມີດກົດໝາຍ ພະນັກງານມີຄວາມຄິດເຫັນ ລະດັບປານກາງ ໂດຍມີຄ່າສະເລ່ຍ 2.90 ແລະ ຄ່າຜັນປ່ຽນມາດຕະຖານ 1.07, ຜົນບົດສະຫຼຸບການກວດກາພົບວ່າວິສາຫະກິດມີການທຳລາຍຂໍ້ມູນຫຼັກຖານ, ປອມແປງເອກະສານ ແລະ ການກະທຳຜິດອື່ນທີ່ຕິດພັນກັບການເສຍອາກອນ ພະນັກງານມີຄວາມຄິດເຫັນ ລະດັບປານກາງ ໂດຍມີຄ່າສະເລ່ຍ 2.80 ແລະ ຄ່າຜັນປ່ຽນມາດຕະຖານ 0.99, ການສົ່ງລາຍງານຜົນການກວດກາມີຄວາມຊັກຊ້າ ແລະ ບໍ່ທັນເວລາ ພະນັກງານມີຄວາມຄິດເຫັນ ລະດັບປານກາງ ໂດຍມີຄ່າສະເລ່ຍ 2.71 ແລະ ຄ່າຜັນປ່ຽນມາດຕະຖານ 1.04, ໄລຍະເວລາຕາມໃບສັ່ງມອບອາກອນທີ່ກວດຄືນໄດ້ຫຼາຍເກີນໄປ ພະນັກງານມີຄວາມຄິດເຫັນ ລະດັບປານກາງ ໂດຍມີຄ່າສະເລ່ຍ 2.69 ແລະ ຄ່າຜັນປ່ຽນມາດຕະຖານ 0.74, ວິສາຫະກິດມີການຮຽກຮ້ອງຂໍໃຫ້ມີການກວດກາຄືນໃໝ່ ພະນັກງານມີຄວາມຄິດເຫັນ ລະດັບໜ້ອຍ ເພາະວ່າ ວິສາຫະກິດທີ່ຂໍໃຫ້ມີການກວດກາຄືນໃໝ່ແມ່ນໜ້ອຍ ຈຶ່ງບໍ່ເປັນບັນຫາໃຫ້ທາງເຈົ້າໜ້າທີ່ຫຼາຍ ໂດຍມີຄ່າສະເລ່ຍ 2.30 ແລະ ຄ່າຜັນປ່ຽນມາດຕະຖານ 1.02.

**ປຽບທຽບຄວາມຄິດເຫັນຂອງພະນັກງານສ່ວຍສາອາກອນປະຈຳແຂວງວຽງຈັນຕໍ່ບັນຫາກວດກາຫຼັງການແຈ້ງລາຍຮັບຕາມປັດໄຈສ່ວນບຸກຄົນ**

- ຜູ້ທີ່ມີໄລຍະເວລາໃນການເຮັດວຽກທີ່ແຕກຕ່າງກັນ ມີຄວາມຄິດເຫັນຕໍ່ບັນຫາດ້ານການວາງແຜນ ແລະ ການກະກຽມກ່ອນການກວດກາບໍ່ແຕກຕ່າງກັນ, ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05

- ຜູ້ທີ່ມີໄລຍະເວລາໃນການເຮັດວຽກທີ່ແຕກຕ່າງກັນ ມີຄວາມຄິດເຫັນຕໍ່ບັນຫາດ້ານການວາງແຜນ ແລະ ການກະກຽມກ່ອນການກວດກາແຕກຕ່າງກັນຢູ່ 1 ດ້ານຄື: ເຈົ້າໜ້າທີ່ສ່ວຍສາອາກອນບໍ່ປະຕິບັດລະບຽບ, ມາດຕະຖານ, ຄູ່ມື ແລະ ວິທີການປະຕິບັດກ່ຽວກັບວຽກງານກວດກາ. ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05; ສ່ວນໃນດ້ານອື່ນໆແມ່ນບໍ່ມີຄວາມແຕກຕ່າງກັນ.

- ຜູ້ທີ່ມີໄລຍະເວລາໃນການເຮັດວຽກທີ່ແຕກຕ່າງກັນ ມີຄວາມຄິດເຫັນຕໍ່ບັນຫາດ້ານການສະຫຼຸບ ແລະ ການບັນທຶກຜົນການກວດກາແຕກຕ່າງກັນຢູ່ 1 ດ້ານຄື: ໄລຍະເວລາຕາມໃບສັ່ງມອບອາກອນທີ່ກວດຄືນໄດ້ຫຼາຍເກີນໄປ. ດ້ວຍລະດັບຄວາມສຳຄັນທາງສະຖິຕິ

0.05; ສ່ວນໃນດ້ານອື່ນໆແມ່ນບໍ່ມີຄວາມແຕກຕ່າງກັນ.

- ຜູ້ທີ່ມີຕຳແໜ່ງທີ່ແຕກຕ່າງກັນ ມີຄວາມຄິດເຫັນຕໍ່ບັນຫາດ້ານການວາງແຜນ ແລະ ການກະກຽມກ່ອນການກວດກາແຕກຕ່າງກັນຢູ່ 1 ດ້ານຄື: ເອກະສານດຳເນີນງານສຳລັບການກວດກາທີ່ສ້າງໂດຍຜູ້ກວດກາບໍ່ໄດ້ຮັບການປັບປຸງ ເຮັດໃຫ້ບໍ່ສອດຄ່ອງກັບສະພາບຕົວຈິງໃນແຕ່ລະຂັ້ນຕອນຂອງການປະຕິບັດງານ. ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05; ສ່ວນໃນດ້ານອື່ນໆແມ່ນບໍ່ມີຄວາມແຕກຕ່າງກັນ.

- ຜູ້ທີ່ມີຕຳແໜ່ງທີ່ແຕກຕ່າງກັນ ມີຄວາມຄິດເຫັນຕໍ່ບັນຫາດ້ານການດຳເນີນການກວດກາແຕກຕ່າງກັນຢູ່ 2 ດ້ານຄື: ພະນັກງານສ່ວຍສາອາກອນບໍ່ພຽງພໍຕໍ່ການດຳເນີນການກວດກາ, ວິສາຫະກິດ/ພະນັກງານບັນຊີ ໄດ້ມີການພະຍາຍາມບ່າຍບ່ຽງຕໍ່ກັບການຊັກຖາມຂອງເຈົ້າໜ້າທີ່ກວດກາ. ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05; ສ່ວນໃນດ້ານອື່ນໆແມ່ນບໍ່ມີຄວາມແຕກຕ່າງກັນ.

- ຜູ້ທີ່ມີຕຳແໜ່ງງານທີ່ແຕກຕ່າງກັນ ມີຄວາມຄິດເຫັນຕໍ່ບັນຫາດ້ານການສະຫຼຸບ ແລະ ການບັນທຶກຜົນການກວດກາບໍ່ແຕກຕ່າງກັນ, ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05

- ຜູ້ທີ່ມີຂະແໜງທີ່ສັງກັດແຕກຕ່າງກັນ ມີຄວາມຄິດເຫັນຕໍ່ບັນຫາດ້ານການວາງແຜນ ແລະ ການກະກຽມກ່ອນການກວດກາບໍ່ແຕກຕ່າງກັນ, ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05

- ຜູ້ທີ່ມີຂະແໜງທີ່ສັງກັດແຕກຕ່າງກັນ ມີຄວາມຄິດເຫັນຕໍ່ບັນຫາດ້ານການດຳເນີນການກວດກາແຕກຕ່າງກັນຢູ່ 1 ດ້ານຄື: ບໍ່ໄດ້ຮັບການຮ່ວມມືຈາກວິສາຫະກິດກ່ຽວກັບການກະກຽມເອກະສານຕ່າງໆ, ຫຼັກການ, ການໃຫ້ຂໍ້ມູນ ແລະ ຄຳຊີ້ແຈງຕ່າງໆ, ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05. ສ່ວນໃນດ້ານອື່ນໆແມ່ນບໍ່ມີຄວາມແຕກຕ່າງກັນ.

- ຜູ້ທີ່ມີຂະແໜງທີ່ສັງກັດແຕກຕ່າງກັນ ມີຄວາມຄິດເຫັນຕໍ່ບັນຫາດ້ານການສະຫຼຸບ ແລະ ການບັນທຶກຜົນການກວດກາບໍ່ແຕກຕ່າງກັນ, ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05

**ອະພິປາຍຜົນ**

ຜົນການສຶກສາຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມກ່ຽວກັບຄວາມຄິດເຫັນຂອງພະນັກງານສ່ວຍສາອາກອນປະຈຳແຂວງວຽງຈັນຕໍ່ກັບບັນຫາວຽກງານກວດກາຫຼັງການແຈ້ງລາຍຮັບເຫັນວ່າ: (1) ດ້ານສາຂາທີ່ຮຽນຈົບຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນຮຽນຈົບໃນສາຂາ ບໍລິຫານທຸລະກິດເຊິ່ງມີຈຳນວນ 27 ຄົນ, ຄິດເປັນ 64.3 ສ່ວນຮ້ອຍ; (2) ດ້ານລະດັບການສຶກສາຂອຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນມີລະດັບການສຶກສາໃນລະດັບປະລິນຍາຕີ ກວມເອົາ 29 ຄົນ, ຄິດເປັນ 69 ສ່ວນຮ້ອຍ; (3) ດ້ານຕຳແໜ່ງຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນມີຕຳແໜ່ງເປັນພະນັກງານວິຊາການ ເຊິ່ງມີຈຳນວນ 28 ຄົນ, ຄິດເປັນ 66.7 ສ່ວນຮ້ອຍ; (4) ດ້ານຂະແໜງການທີ່ສັງກັດຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນສັງກັດໃນ ຂະແໜງ ແຜນການ ແລະ ບໍລິການລາຍຮັບ ກວມ ຊຶ່ງມີຈຳນວນ 15 ຄົນ, ຄິດເປັນ 35.7 ສ່ວນຮ້ອຍ; (5) ດ້ານໄລຍະເວລາໃນການເຮັດວຽກຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນມີໄລຍະເວລາໃນການເຮັດວຽກ 16 ປີຂຶ້ນໄປ ກວມເອົາ 19 ຄົນ, ຄິດເປັນ 45.2 ສ່ວນຮ້ອຍ

ໃນລະດັບຄວາມຄິດເຫັນຕໍ່ກັບບັນຫາ (1) ຄວາມຄິດເຫັນຂອງພະນັກງານສ່ວຍສາອາກອນປະຈຳແຂວງວຽງຈັນ ຕໍ່ບັນຫາດ້ານການວາງແຜນ ແລະ ການກະກຽມກ່ອນການກວດກາ ໂດຍລວມແລ້ວພະນັກງານມີຄວາມຄິດເຫັນ ລະດັບປານກາງ, (2) ຄວາມຄິດເຫັນຂອງພະນັກງານສ່ວຍສາອາກອນປະຈຳແຂວງວຽງຈັນ ຕໍ່ບັນຫາດ້ານການດຳເນີນການກວດກາໂດຍລວມແລ້ວພະນັກງານມີຄວາມຄິດເຫັນ ລະດັບປານກາງ, (3) ຄວາມຄິດເຫັນຂອງພະນັກງານສ່ວຍສາອາກອນປະຈຳແຂວງວຽງຈັນ ຕໍ່ບັນຫາຈາກການສະຫຼຸບ ແລະ ການບັນທຶກຜົນການກວດກາໂດຍລວມແລ້ວພະນັກງານມີຄວາມຄິດເຫັນ ລະດັບ ປານກາງ

1) ປຽບທຽບຜົນການຄົ້ນຄວ້າລະຫວ່າງບົດຄົ້ນຄວ້າອື່ນກັບບົກຄົ້ນຄວ້າບົດນີ້.

ໂດຍບົດຄົ້ນຄວ້າທີ່ໃຊ້ໃນການປຽບທຽບແມ່ນບົດຂອງ ທ່ານ ດວງຕາ ວິໄລພັນ (2016) ໄດ້ສຶກສາຄວາມເຂົ້າໃຈຂອງຜູ້ປະກອບການທີ່ມີຕໍ່ວຽກງານກວດກາ-ໄລ່ລຽງອາກອນທ້າຍປີຂອງພະແນກອາກອນແຂວງວຽງຈັນ ໂດຍໄດ້ຂໍ້ແຕກຕ່າງດັ່ງນີ້:

ກ. ສິ່ງທີ່ຄ້າຍຄືກັນ:

ລະດັບການສຶກສາຂອງຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນຢູ່ໃນລະດັບປະລິນຍາຕີ, ສາຂາທີ່ຮຽນຈົບຂອງຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນຈົບໃນສາຂາ ບໍລິຫານທຸລະກິດ.

ຂ. ສິ່ງທີ່ແຕກຕ່າງກັນ:

ກຸ່ມປະຊາກອນ ແລະ ກຸ່ມຕົວຢ່າງຂອງຜູ້ຕອບແບບສອບຖາມ, ອາຍຸຂອງຜູ້ຕອບແບບສອບຖາມ, ປະສົບການໃນການເຮັດວຽກຂອງຜູ້ຕອບແບບສອບຖາມ.

ເຊິ່ງສ່ວນໃຫຍ່ແມ່ນມີຄວາມແຕກຕ່າງກັນຫຼາຍພໍສົມຄວນອັນເນື່ອງມາຈາກ ບົດທີ່ຜູ້ຄົ້ນຄວ້າໄດ້ນຳມາໃຊ້ໃນການປຽບທຽບຄັ້ງນີ້ແມ່ນໄດ້ສຶກສາຄວາມເຂົ້າໃຈຂອງຜູ້ປະກອບການໃນແຂວງວຽງຈັນທີ່ມີຕໍ່ວຽກງານກວດກາ-ໄລ່ລຽງອາກອນ; ເຊິ່ງກຸ່ມຕົວຢ່າງແມ່ນແຕກຕ່າງກັນ.

**ສະຫຼຸບຜົນການຄົ້ນຄວ້າ**

**1) ຄວາມຄິດເຫັນຕໍ່ບັນຫາກວດກາຫຼັງການແຈ້ງລາຍຮັບ**

- ຄວາມຄິດເຫັນຂອງພະນັກງານສ່ວຍສາອາກອນປະຈຳແຂວງ ວຽງຈັນ ຕໍ່ບັນຫາກວດກາຫຼັງການແຈ້ງລາຍຮັບໃນບັນຫາດ້ານການວາງແຜນ ແລະ ກະກຽມກ່ອນການກວດກາໂດຍລວມແລ້ວແມ່ນຢູ່ໃນລະດັບປານກາງ ໂດຍມີຄ່າສະເລ່ຍ 2.78. ໃນນັ້ນ, ເຈົ້າໜ້າທີ່ສ່ວຍສາອາກອນມີຄວາມຄິດເຫັນຕໍ່ກັບການເກັບກຳຂໍ້ມູນກ່ອນການເລີ່ມຕົ້ນດຳເນີນການກວດກາຍັງບໍ່ພຽງພໍຫຼາຍກວ່າບັນຫາອື່ນໆ ເຊິ່ງມັນສະແດງໃຫ້ເຫັນວ່າໃນປັດຈຸບັນເຈົ້າໜ້າທີ່ສ່ວຍສາອາກອນຍັງບໍ່ໄດ້ຮັບຂໍ້ມູນຈາກວິສາຫະກິດພຽງພໍເທົ່າທີ່ຄວນ.
- ຄວາມຄິດເຫັນຂອງພະນັກງານສ່ວຍສາອາກອນປະຈຳແຂວງ ວຽງຈັນ ຕໍ່ບັນຫາກວດກາຫຼັງການແຈ້ງລາຍຮັບໃນບັນຫາດ້ານການດຳເນີນການກວດກາໂດຍລວມແລ້ວແມ່ນຢູ່ໃນລະດັບປານກາງ ໂດຍມີຄ່າສະເລ່ຍ 2.75. ໃນນັ້ນ, ເຈົ້າໜ້າທີ່ສ່ວຍສາອາກອນມີຄວາມຄິດເຫັນຕໍ່ກັບວິສາຫະກິດສະໜອງເອກະສານລາຍງານການເງິນ ແລະ ຫຼັກຖານທາງການບັນຊີບໍ່ຄົບຖ້ວນເຮັດໃຫ້ເກີດຂໍ້ຫຍຸ້ງຍາກຢູ່ໃນລະດັບຫຼາຍ. ເຊິ່ງມັນສະແດງໃຫ້ເຫັນວ່າວິສາຫະກິດຍັງບໍ່ ມີການເອົາໃຈໃສ່ ແລະ ລະເລີຍໃນການກະກຽມເອກະສານໃຫ້ຄົບຖ້ວນຕາມລະບຽບກົດໝາຍທີ່ໄດ້ກຳນົດ.
- ຄວາມຄິດເຫັນຂອງພະນັກງານສ່ວຍສາອາກອນປະຈຳແຂວງ ວຽງຈັນ ຕໍ່ບັນຫາກວດກາຫຼັງການແຈ້ງລາຍຮັບໃນບັນຫາດ້ານການສະຫຼຸບ ແລະ ການບັນທຶກຜົນການກວດກາໂດຍລວມແລ້ວແມ່ນຢູ່ໃນລະດັບປານກາງ ໂດຍມີຄ່າສະເລ່ຍ 2.98. ໃນນັ້ນ, ເຈົ້າໜ້າທີ່ສ່ວຍສາອາກອນມີຄວາມຄິດເຫັນຕໍ່ກັບວິສາຫະກິດມີການຕົບແຕ່ງລາຍຈ່າຍພາຍໃນບໍລິສັດຫຼາຍ ເຊິ່ງສະແດງໃຫ້ເຫັນວ່າວິສາຫະກິດແມ່ນໄດ້ມີການພະຍາຍາມເຮັດໃຫ້ລາຍຮັບຫຼຸດລົງເພື່ອຈະໄດ້ມອບພັນທະອາກອນໜ້ອຍລົງ ແລະ ບໍ່ຄວາມເຊື່ອສັດໃນການມອບພັນທະຕໍ່ລັດຖະບານ.

**2) ການປຽບທຽບລະດັບຄວາມຄິດເຫັນຕໍ່ບັນຫາກວດກາຫຼັງການແຈ້ງລາຍຮັບ**

ຜົນຂອງການປຽບທຽບລະດັບຄວາມຄິດເຫັນຂອງພະນັກງານສ່ວຍສາອາກອນປະຈຳແຂວງ ວຽງຈັນ ຕໍ່ບັນຫາກວດກາຫຼັງການແຈ້ງລາຍຮັບ ໂດຍແຍກຕາມປັດໄຈສ່ວນບຸກຄົນໄດ້ມີການທົດສອບສົມມຸດຖານທົດສອບຄວາມແຕກຕ່າງດ້ວຍຄ່າສະເລ່ຍ F-Test ຫຼື One-Way ANOVA ໃນໂປຣແກຣມ SPSS ລະຫວ່າງຄວາມສຳພັນຂອງຕົວປ່ຽນທີ່ມີຕໍ່ຄວາມຄິດເຫັນ ຂອງພະນັກງານສ່ວຍສາອາກອນປະຈຳແຂວງວຽງຈັນ ຕໍ່ບັນຫາກວດກາຫຼັງການແຈ້ງລາຍຮັບ ແຕ່ລະດ້ານປັດໃຈສ່ວນບຸກຄົນກໍ່ຄື: ໄລຍະເວລາການເຮັດວຽກ, ລະດັບຊັ້ນຕຳແໜ່ງ ແລະ ຂະແໜງທີ່ສັງກັດ ເຊິ່ງຜົນອອກມາມີດັ່ງນີ້:

ປຽບທຽບຕາມໄລຍະເວລາໃນການເຮັດວຽກແມ່ນເຫັນໄດ້ວ່າ: ຜູ້ທີ່ມີໄລຍະເວລາເຮັດວຽກແຕກຕ່າງກັນມີຄວາມຄິດເຫັນແຕກຕ່າງກັນໃນດ້ານດຽວເທົ່ານັ້ນ ຄື: ບັນຫາດ້ານການດຳເນີນງານ, ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05. ສ່ວນໃນດ້ານອື່ນໆແມ່ນມີຄວາມຄິດເຫັນຕໍ່ບັນດາຄືກັນໂດຍບໍ່ຈຳແນກຕາມໄລຍະເວລາໃນການເຮັດວຽກແຕ່ຢ່າງ ໃດ.

ປຽບທຽບຕາມລະດັບຊັ້ນຕຳແໜ່ງແມ່ນເຫັນໄດ້ວ່າ: ຜູ້ທີ່ມີລະດັບຊັ້ນຕຳແໜ່ງທີ່ ແຕກຕ່າງກັນມີຄວາມຄິດເຫັນ ແຕກຕ່າງກັນໃນ 2 ດ້ານຄື: ບັນຫາດ້ານການວາງແຜນ ແລະ ການກະກຽມກ່ອນການກວດກາ; ບັນຫາດ້ານການສະຫຼຸບ ແລະ ການບັນທຶກຜົນການກວດກາທີ່ແຕກຕ່າງກັນ, ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05, ເຊິ່ງໝາຍຄວາມວ່າແຕ່

ລະດັບຊັ້ນຕຳແໜ່ງທີ່ແຕກຕ່າງກັນມີຜົນຕໍ່ຄວາມຄິດເຫັນຕໍ່ບັນຫາແຕກຕ່າງກັນອອກໄປໃນແຕ່ລະດ້ານ, ແຕ່ກໍ່ຍັງມີບາງສ່ວນທີ່ມີຄວາມຄິດເຫັນຕໍ່ບັນຫາໄປໃນທາງດຽວກັນ.

ປຽບທຽບຕາມພະແນກທີ່ສັງກັດແມ່ນເຫັນໄດ້ວ່າ: ຜູ້ທີ່ມີຂະແໜງທີ່ສັງກັດທີ່ແຕກຕ່າງກັນມີຄວາມຄິດເຫັນແຕກຕ່າງກັນໃນດ້ານດຽວຄື: ບັນຫາດ້ານການສະຫຼຸບ ແລະ ການບັນທຶກຜົນການກວດກາທີ່ແຕກຕ່າງກັນ, ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05. ແຕ່ສຳລັບໃນດ້ານອື່ນໆແມ່ນມີຄວາມຄິດເຫັນຕໍ່ບັນຫາຄືກັນໂດຍບໍ່ຈຳແນກຕາມພະແນກທີ່ສັງກັດແຕ່ຢ່າງໃດ.

**ຂໍ້ສະເໜີແນະ**

- ຄວນໂຄສະນາ, ເຜີຍແຜ່ກ່ຽວກັບລະບຽບການແຕ່ລະຂໍ້ຂອງກົດໝາຍທີ່ບັນດາວິສາຫະກິດມັກກະທຳຜິດໂດຍສະເພາະໃນດ້ານການຮັບຮູ້ລາຍຮັບ ແລະ ລາຍຈ່າຍ. ໂດຍສະເພາະນັກທຸລະກິດທີ່ເປັນຄົນຕ່າງຊາດທີ່ຍັງບໍ່ທັນເຂົ້າໃຈ ແລະ ເມີນເສີຍຕໍ່ການເສຍພັນທະ.

- ຄວນປັບປຸງ ວິທີການກວດກາໃໝ່ໃຫ້ແທດເໝາະກັບສະພາບການປະຕິບັດງານໃນປັດຈຸບັນ.

- ຄວນມີມາດຕະການທີ່ເຂັ້ມງວດ ແລະ ເຮັດໃຫ້ນັກທຸລະກິດເຂົ້າໃຈຫຼາຍຂຶ້ນໃນດ້ານຄວາມສຳຄັນຂອງວຽກງານກວດກາ, ກົດໝາຍ ແລະ ພັນທະທີ່ຕ້ອງມອບໃຫ້ແກ່ລັດຖະບານ.

- ຜູ້ປະກອບການຄວນໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ໃຫ້ຫຼາຍຂຶ້ນໃນການສະໜອງເອກະສານຕ່າງໆ ແລະ ຕອບຄຳຖາມຂອງເຈົ້າໜ້າທີ່ສ່ວຍສາໃຫ້ຊັດເຈນ.

- ຜູ້ປະກອບການຄວນມາເຂົ້າຮ່ວມງານສຳມະນາ ຫຼື ເຝິກອົບຮົມທີ່ທາງສ່ວຍສາອາກອນແຂວງຈັດຂຶ້ນພາຍໃຕ້ການຊີ້ນຳຂອງກະຊວງການເງິນ.

- ໜ່ວຍງານທີ່ກ່ຽວຂ້ອງຄວນໃຫ້ຄວາມຮູ້ແກ່ນັກທຸລະກິດເພີ່ມຕື່ມ (ເຜີຍແຜ່ກົດໝາຍ, ລະບຽບການ ແລະ ຄວາມຮູ້ທາງວິຊາການຕ່າງໆ) ໂດຍທີ່ມີທຶນແລ້ວສາມາດເຮັດທຸລະກິດໄດ້ຖືກຕ້ອງຕາມລະບຽບກົດໝາຍ.

**ເອກະສານອ້າງອີງ**


ກະນິການ ສຸດີພົງສະຫວັດ. (2012). *ສຶກສາການດຳເນີນງານການປະກັນສຸຂະພາບການສຶກສາ.* ສາຂາພັດທະນາຊັບພະຍາກອນມະນຸດ: ສະຖາບັນການສຶກສາວິທະຍາເຂດພັດສະບູນ.

ສະພາແຫ່ງຊາດ. (2013). *ກົດໝາຍວ່າດ້ວຍການບັນຊີ. ສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013.* ເອົາມາ https://www.mof.gov.la/wp-content/uploads/2018/11/32.ກົດໝາຍວ່າດວ້ຍ-ການບັນຊີ-ສະບັບປັບປຸງ-1228.pdf

ສະພາແຫ່ງຊາດ. (2015). *ກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 70/ສພຊ ລົງວັນທີ 15 ທັນວາ 2015.* ເອົາມາ https://www.mof.gov.la/wp-content/uploads/2018/11/ 32.ກົດໝາຍວ່າດວ້ຍ-ການບັນຊີ-ສະບັບປັບປຸງ-1228.pdf

ສະພາແຫ່ງຊາດ. (2018). *ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ (ສະບັບປັບປຸງ) ເລກທີ 48/ສພຊ.* ເອົາມາ https://www.mof.gov.la/wp-content/uploads/2018/11/6.ກົດໝາຍວ່າດວ້ຍ-ອາກອນມູນຄ່າເພີ້ມ-1266.pdf

ສະພາແຫ່ງຊາດ. (2019). *ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ເລກທີ 66/ສພຊ.* Retrieved from https://www.mof.gov.la/wp-content/uploads/2020/02/ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນສະບັບປັບປຸງ-ສະບັບເລກທີ-66ສພຊ-ລົງວັນທີ-17-ມິຖຸນາ-2019.pdf

ສະພາແຫ່ງຊາດ. (2019). *ກົດໝາຍວ່າດ້ວຍອາກອນຊົມໃຊ້ ເລກທີ 68/ສພຊ.* ເອົາມາ https://www.mof.gov.la/wp-content/uploads/2020/02/ກົດໝາຍວ່າດ້ວຍອາກອນສົມໃຊ້-ສະບັບເລກທີ-68ສພຊ-ລົງວັນທີ-19-ມິຖຸນາ-2019.pdf

ສະພາແຫ່ງຊາດ. (2019). *ກົດໝາຍວ່າດ້ວຍອາກອນລາຍໄດ້ ເລກທີ 67 /ສພຊ.* ເອົາມາ https://www.mof.gov.la/wp-content/uploads/2020/02/ກົດໝາຍວ່າ

ດ້ວຍອາກອນລາຍໄດ້-ສະບັບເລກທີ-67ສພຊ-ລົງວັນທີ-18-ມິຖຸນາ-2019.pdf

ດວງຕາ ວິໄລພັນ. (2016). *ສຶກສາຄວາມເຂົ້າໃຈຂອງຜູ້ປະກອບການທີ່ມີຕໍ່ວຽກງານກວດກາ- ໄລລຽງອາກອນທ້າຍປີຂອງພະແນກສ່ວຍສາອາກອນແຂວງວຽງຈັນ.* ນະຄອນຫຼວງວຽງຈັນ: ວິທະຍານິພົນປະລິນຍາໂທ, ສາຂາບັນຊີ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ.

ທີຣະເວຄິນ, ນິບພະມາດ. (1996). *ທິດສະດີຄວາມຄິດເຫັນຈິດວິທະຍາສັງຄົມຊີວິດ (ພິມຄັ້ງທີ 2).* ກຸງເທບ: ມະຫາວິທະຍາໄລທຳມະສາດ (ໜ້າ 39).

ນັດຖະພັນ ເບັນຈະນັນ ແລະ ຊັດພອນ ສະເໜີໃຈ . (2004). *ທິດສະດີຄວາມຄິດເຫັນການບໍລິ ຫານການຕະຫຼາດຍຸກໃໝ່.* ກຸງເທບ: ພັດທະນາການສຶກສາ.

ພັດ ສຸຈຳນົງ. (2006). *ຫຼັກການຝຶກອົບຮົມແບບໃໝ່.* ບາງກອກ: ທິບອັກສອນການພິມ.

Adam Smith . (1776). *The Wealth of Nation* . Scotland, Kingdom of Great Britain: William Strahan, Thomas Cadell.

Best, J. (1997). *Research in Education, 3rd.* Englewood cliff. New Jersey: Prentice Hall

Charter Foster. (1952). *Psychology for life Adjustment.* Chicago: American Technical Society .

Fredman Bowden. (2005). *Research Theory and Practice* . New Jersey: Uppersadde River.

Oskamp. (1977). *Attitude and opinion* . New Jersey: Prentice hall inc.pp (Page 119-133).